ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21-24 ກໍລະກົດ 2022
ປີທີ 11
ສະບັບທີ 861

# ພິທີປະດັບຫລຽນໄຊ ໃຫ້ການນຳຂັ້ນສູງ ພັກ-ລັດ ແຫ່ງ ສປປລາວ



(ສພຊ) ພິທີປະດັບຫຽນໄຊ ແຫ່ງ ສສ.ຫວຽດນາມ ໃຫ້ການນຳຂັ້ນສູງ ພັກ-ລັດ ແຫ່ງ ສປປລາວ ໄດ້ຈັດຂຶ້ນຢ່າງຍິ່ງໃຫຍ່ ແລະ ສົມກຽດ ໃນວັນທີ 18 ກໍລະກົດຜ່ານມາ, ທີ່ຫໍປະຊຸມແຫ່ງຊາດ ໂດຍການເປັນກຽດເຂົ້າຮ່ວມຂອງສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ປະທານປະເທດ ແຫ່ງ ສປປລາວ; ສະຫາຍ ຫວໍ ວັນ ເຖື້ອງ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳລະດັບຊາດ ສະເຫລີມສະຫລອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ ປີ 2022 ພ້ອມດ້ວຍຄະນະ; ສະຫາຍ ພັນຄຳ ວິພາວັນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແຫ່ງ ສປປລາວ; ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສປປລາວ; ມີບັນດາສະຫາຍການນຳພັກ-ລັດຖະບານ, ພະນັກງານ, ທະຫານ, ຕຳຫລວດ ແລະ ພາກສ່ວນກ່ຽວຂ້ອງຂອງສອງຝ່າຍ ລາວ-ຫວຽດນາມ ເຂົ້າຮ່ວມ.

ໃນພິທີ, ສະຫາຍ ຫວໍ ວັນ ເຖື້ອງ ໄດ້ຕາງໜ້າໃຫ້ພັກ ແລະ ລັດຖະບານ ແຫ່ງ ສສ.ຫວຽດນາມ ປະດັບຫລຽນໄຊ ໃຫ້ການນຳຂັ້ນສູງພັກ-ລັດ ແຫ່ງ ສປປລາວ ທັງໝົດ 11 ສະຫາຍ ເຊິ່ງປະກອບມີ: ຫລຽນໄຊດາວຄຳ ມີ 2 ສະຫາຍ ຄື: ສະຫາຍ ພັນຄຳ ວິພາວັນ ແລະ ສະຫາຍ ໄຊສົມພອນ ພົມວິຫານ; ຫລຽນໄຊໂຮ່ຈີມິນ ມີ 4 ສະຫາຍ ຄື: ສະຫາຍ ກິແກ້ວ ໄຂຄຳພິທູນ, ສະຫາຍ ພົອ. ວິໄລ ຫລ້າຄຳຟອງ, ສະຫາຍ ນາງ ສີໃສ ລືເດດມູນສອນ ແລະ ສະຫາຍ ສະເຫລີມໄຊ ກົມມະສິດ. ຫລຽນໄຊເອກະລາດ ຊັ້ນ I ມີ 5 ສະຫາຍ ຄື: ສະຫາຍ ຄຳພັນ ເຜີຍຍະວົງ, ສະຫາຍ ອານຸພາບ ຕູນາລົມ, ສະຫາຍ ທອງສະລິດ ມັງໜໍ່ເມກ, ສະຫາຍ ນາງ ສູນທອນ ໄຊຍະຈັກ ແລະ ສະຫາຍ ນາງ ວຽງທອງ ສີພັນດອນ.

ໃນພິທີອັນມີຄວາມໝາຍ

ອ່ານຕໍ່ໜ້າ 2

# ປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າພົບປະ ຂອງຄະນະຜູ້ແທນຂັ້ນສູງ ສສ.ຫວຽດນາມ



(ສພຊ) ວັນທີ 17 ກໍລະກົດ 2022 ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າພົບປະຂອງສະຫາຍ ຫວໍ ວັນ ເຖື້ອງ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຄະນະຊີ້ນຳລະດັບຊາດ ສະເຫລີມສະຫລອງປີສາມັກຄີມິດຕະພາບ ຫວຽດນາມ-ລາວ, ໃນໂອກາດທີ່ໄດ້ນຳຄະນະຜູ້ແທນຂັ້ນສູງ ຂອງ ສສ.ຫວຽດນາມ ເດີນທາງມາຢ້ຽມຢາມ ສປປລາວ ແລະເຂົ້າຮ່ວມພິທີສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ ກໍຄືໂອກາດວັນສ້າງຕັ້ງສາຍພົວພັນການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນ

ອ່ານຕໍ່ໜ້າ 3

# ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຢ້ຽມຂ່ຳນັບປະທານສະພາແຫ່ງຊາດ ຫວຽດນາມ



(ສພຊ) ວັນທີ 13 ກໍລະກົດ 2022 ຢູ່ທີ່ຫ້ອງຮັບແຂກຂອງສະພາແຫ່ງຊາດຫວຽດນາມ ນະຄອນຫລວງຮ່າໂນ້ຍ ສສ.ຫວຽດນາມ; ສະຫາຍ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ນຳພາຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ເຂົ້າຢ້ຽມຂ່ຳນັບສະຫາຍເວືອງ ດິງ ເຫວະ ກຳມະການກົມການເມືອງສູນກາງພັກ,

ອ່ານຕໍ່ໜ້າ 2

# ປະກອບຄຳເຫັນໃສ່ຮ່າງມະຕິ ຂອງຄະນະປະຈຳສະພາແຫ່ງຊາດ




(ສພຊ) ເພື່ອເຮັດໃຫ້ຮ່າງນິຕິກຳ ກ່ຽວກັບການຕິດຕາມກວດກາການປະເມີນການປະຕິບັດກົດໝາຍ ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້; ໃນວັນທີ 12-13 ກໍລະກົດ 2022 ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມປະກອບຄຳເຫັນໃສ່ຮ່າງນິຕິກຳ ກ່ຽວກັບການຕິດຕາມກວດກາການປະເມີນການປະຕິບັດກົດໝາຍ ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງ

ອ່ານຕໍ່ໜ້າ 3

# ເຝິກອົບຮົມການນຳໃຊ້ G-Chat ໃຫ້ພະນັກງານພາຍໃນສະພາແຫ່ງຊາດ



ໜ້າ 3



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 7



ໜ້າ 5



ໜ້າ 5



## ພິທີ...

ສຳຄັນນີ້, ສະຫາຍ ພັນຄຳ ວິພາວັນ ໄດ້ຕາງໜ້າໃຫ້ບັນດາສະຫາຍທີ່ໄດ້ຮັບການປະດັບຫລຽນຂຶ້ນກ່າວຂອບໃຈ ໂດຍໄດ້ສະແດງຄວາມຮູ້ສຶກພາກພູມໃຈ ແລະ ຖືເປັນກຽດຢ່າງສູງ ທີ່ໄດ້ເຂົ້າຮ່ວມພິທີສະເຫລີມສະຫລອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ, ອັນເຕັມໄປດ້ວຍຄວາມໝາຍອັນສູງສົ່ງ, ພິເສດແມ່ນການປະດັບຫລຽນໄຊສູງສຸດຂອງ ສສ.ຫວຽດນາມ ມອບໃຫ້ແກ່ການນຳຂັ້ນສູງພັກ-ລັດ ສປປລາວ. ການທີ່ພັກ-ລັດ ສສ.ຫວຽດນາມ ໄດ້ຕົກລົງປະດັບຫລຽນໄຊ ໃຫ້ແກ່ການນຳຂັ້ນສູງພັກ-ລັດ ຂອງ ສປປລາວ ໃນຄັ້ງນີ້, ຖືເປັນຂອງຂວັນອັນລ້ຳຄ່າ, ເປັນລາງວັນລະດັບສູງສຸດຂອງພັກ ແລະ ລັດຖະບານ ແຫ່ງ ສສ.ຫວຽດນາມ ມອບໃຫ້ການນຳພັກ-ລັດ ສປປລາວ, ບໍ່ສະເພາະແຕ່ສ່ວນຕົວຂອງບັນດາສະຫາຍທີ່ໄດ້ຮັບການຍ້ອງຍໍເທົ່ານັ້ນ, ແຕ່ຍັງສະແດງເຖິງການຮັບຮູ້ອັນເລິກເຊິ່ງ ແລະ ຖືເປັນກຽດອັນສູງສົ່ງ ທີ່ມີຕໍ່ພັກ-ລັດ ແຫ່ງ ສປປລາວ ອີກດ້ວຍ. ການໄດ້ຮັບການປະດັບຫລຽນໄຊສູງສຸດ ເຊິ່ງເປັນຂອງຂວັນອັນລ້ຳຄ່າຂອງສະຫາຍຫວຽດນາມ ມອບໃຫ້ໃນຄັ້ງນີ້, ນອກຈາກເປັນກຽດສັກສີແລ້ວຍັງເປັນກຳລັງໃຈອັນໃຫຍ່ຫລວງ, ທັງຖືເປັນພັນທະຂອງຕົນຕໍ່ການສືບຕໍ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ເສີມຂະຫຍາຍມິດຕະພາບອັນມີມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ໄດ້ຮັບການຖະນຸຖະໜອມ, ປົກປັກຮັກສາ ແລະ ເສີມຂະຫຍາຍຈະເລີນງອກງາມຕະຫລອດໄປ. ປັດຈຸບັນ, ໃນຍຸກແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດ, ມິດຕະພາບທີ່ມີມູນເຊື້ອ, ຄວາມສາມັກຄີພິເສດ ຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໄດ້ກາຍເປັນກົດເກນພາວະວິໄສ ແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງສອງຊາດ ໂດຍປະລິຍາຍໄປແລ້ວ, ພວກເຮົາມີແຕ່ຈະພ້ອມກັນຖະນຸຖະໜອມ, ບໍ່ໃຫ້ຈືດຈາງລົງຕາມການເວລາ, ແຕ່ຍິ່ງໄດ້ຮັບການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍຢ່າງບໍ່ຢຸດຢັ້ງທັງລວງກວ້າງ ແລະ ລວງເລິກ ໄວ້ໃຫ້ເຊັ່ນລູກ, ຫລານ, ເຫລັນ, ຫລ້ອນ ຂອງພວກເຮົາ ໄດ້ສືບຕໍ່ປົກປັກຮັກສາໄປຈີນເທົ້າກາລະນານ ແລະ ຈະບໍ່ໃຫ້ສັດຕູໂຕໃດມາມ້າງເພທຳລາຍໄດ້.

ພ້ອມນີ້, ສະຫາຍ ພັນຄຳ ວິພາວັນ ໄດ້ຕາງໜ້າໃຫ້ພັກ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງເລິກເຊິ່ງ ຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫລືອຢ່າງໃຫຍ່ຫລວງ, ລ້ຳຄ່າ, ມີປະສິດທິຜົນ ແລະ ທັນການ ໃຫ້ແກ່ພາລະກິດປະຕິວັດຂອງປະຊາຊົນລາວຕະຫລອດມາ, ບໍ່ວ່າໃນໄລຍະຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ. ພ້ອມທັງໄດ້ອວຍພອນໃຫ້ປະຊາຊົນຫວຽດນາມອ້າຍນ້ອງ ພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງພັກກອມມູນິດຫວຽດນາມ ຜູ້ມີກຽດສະຫງ່າ ຈົ່ງປະສົບຜົນສຳເລັດໃໝ່ໃຫຍ່ຫລວງກວ່າເກົ່າ ໃນການປະຕິບັດເປົ້າໝາຍ ປະຊາຊົນຮັ່ງມີ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ, ຫັນປະເທດເປັນປະເທດອຸດສາຫະກຳຕາມທິດທັນສະໄໝ ແລະ ໄດ້ອວຍພອນໄຊອັນປະເສີດໃຫ້ແກ່ສະຫາຍ ຫວໍ ວັນ ເຖື້ອງ ພ້ອມດ້ວຍຄະນະ ແລະ ໄດ້ຝາກຄວາມຢ້ຽມຢາມຖາມຂ່າວ ແລະ ຄຳອວຍພອນອັນປະເສີດ ໄປຍັງບັນດາສະຫາຍການນຳຂອງພັກ ແລະ ລັດ ແຫ່ງ ສສ.ຫວຽດນາມ. ພ້ອມນີ້, ກໍໄດ້ສະແດງຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ການໃຫ້ກຽດເຂົ້າຮ່ວມພິທີສຳຄັນນີ້ຂອງສະຫາຍເລຂາທິການໃຫຍ່, ປະທານປະເທດຫວຽງລຸນ ສີສຸລິດ ແລະ ອວຍພອນໃຫ້ມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນຕະຫລອດກາລະນານ.

ພິທີປະດັບຫລຽນໄຊ ແຫ່ງ ສສ.ຫວຽດນາມ ໃຫ້ແກ່ການນຳຂັ້ນສູງພັກ ແລະ ລັດຖະບານ ແຫ່ງ ສປປລາວ ໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍຜົນສຳເລັດອັນຈົບງາມຢ່າງຍິ່ງໃຫຍ່ສົມກຽດ ແລະ ມີຄວາມໝາຍລ້ຳຄ່າ, ໃນທ່າມກາງບັນຍາກາດ ທີ່ປະຊາຊົນສອງຊາດ ລາວ-ຫວຽດນາມ ກຳລັງສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2022 ຢ່າງເປັນຂະບວນຟົດຟື້ນ ເພື່ອລະນຶກເຖິງສອງວັນສຳຄັນປະຫວັດສາດ ແຫ່ງການພົວພັນຮ່ວມມືລາວ-ຫວຽດນາມ ຄື: ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ.

(ແຫລ່ງຂ່າວ: ກະຊວງການຕ່າງປະເທດ)



## ຄະນະ...

ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ໃນໂອກາດທີ່ສະຫາຍຮອງປະທານສະພາແຫ່ງຊາດລາວນຳພາຄະນະຜູ້ແທນສະພາແຫ່ງຊາດຢ້ຽມຢາມ ແລະ ເຮັດວຽກ ຢູ່ ສສ.ຫວຽດນາມ ນັບແຕ່ວັນທີ 7-14 ກໍລະກົດ 2022.

ໃນໂອກາດ ເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້; ສະຫາຍ ສົມມາດ ພົລເສນາ ໄດ້ນຳເອົາຄວາມຢື້ຢາມຖາມຂ່າວຈາກສະຫາຍ ປອ. ໄຊຊົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດແຫ່ງ ສປປລາວ ທີ່ຝາກເຖິງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມທັງໄດ້ແຈ້ງໃຫ້ສະຫາຍປະທານສະພາແຫ່ງຊາດຫວຽດນາມຊາບ ກ່ຽວກັບຜົນສຳເລັດຂອງການຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ຢູ່ ສສ.ຫວຽດນາມ ໃນຄັ້ງນີ້; ພ້ອມນັ້ນ, ສະຫາຍຍັງໄດ້ສະແດງຄວາມຂອບອົກຂອບໃຈຕໍ່ພັກ-ລັດ, ປະຊາຊົນ ຫວຽດນາມ ເວົ້າລວມ, ເວົ້າສະເພາະກໍຄືສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ທີ່ໄດ້ໃຫ້ການຊ່ວຍເຫລືອ ແລະ ສະໜັບສະໜູນ ພັກ-ລັດ ປະຊາຊົນລາວ ກໍຄືສະພາແຫ່ງຊາດ ແຫ່ງ ສປປລາວ.

ພ້ອມນັ້ນ, ຍັງໄດ້ສະແດງຄວາມຂອບໃຈທີ່ໄດ້ອຳນວຍຄວາມສະດວກໃນການມາເຮັດວຽກ ແລກປ່ຽນບົດຮຽນ ແລະ ຕ້ອນຮັບຄະນະດ້ວຍຄວາມອົບອຸ່ນ, ສະຫາຍປະທານສະພາແຫ່ງຊາດຫວຽດນາມ ໄດ້ຕີລາຄາສູງຕໍ່ການມາເຮັດວຽກ ແລະ ຢ້ຽມຢາມຂອງຄະນະຜູ້ແທນສະພາແຫ່ງຊາດລາວໃນຄັ້ງນີ້ ເຊິ່ງຢູ່ໃນໄລຍະທີ່ສອງພັກ-ສອງລັດ ແລະ ປະຊາຊົນສອງຊາດພວມຫ້າງຫາກະກຽມສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດ ຫວຽດນາມ-ລາວ ຄົບຮອບ 60 ປີ, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງ ຫວຽດນາມ-ລາວ ຄົບຮອບ 45 ປີ ແລະ ເປັນປີສາມັກຄີມິດຕະພາບ ຫວຽດນາມ-ລາວ.

ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສສ.ຫວຽດນາມ ໃນຄັ້ງນີ້ ແມ່ນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບົດບັນທຶກການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ຫວຽດນາມ-ລາວ ເຊິ່ງເປັນການປະກອບສ່ວນສິ່ງເສີມສາຍພົວພັນມິດຕະພາບທີ່ມີມູນເຊື້ອຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ ກໍຄືສອງສະພາແຫ່ງຊາດ ຫວຽດນາມ-ລາວ ເວົ້າສະເພາະ. ປະທານສະພາແຫ່ງຊາດຫວຽດນາມ ຍັງໄດ້ຍົກໃຫ້ເຫັນກ່ຽວກັບປະສົບການຂອງຫວຽດນາມໃນການຜ່ານຜ່າບັນຫາຫຍຸ້ງຍາກທາງດ້ານເສດຖະກິດໃນໄລຍະຜ່ານມາ ແລະ ຊຸກຍູ້ໃຫ້ມີການແລກປ່ຽນບົດຮຽນ ແລະປະສົບການນຳກັນ.

# ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

❑ ກະຊວງສາທາລະນະສຸກເຊີນຊວນຜູ້ມີອາຍຸ 6 ປີຂຶ້ນໄປ ໃຫ້ໄປສັກວັກຊີນກັນພະຍາດໂຄວິດ-19 ເຂັມ 1, ເຂັມ 2 ແລະ ເຂັມກະຕຸ້ນ ໃນໂຮງໝໍເມືອງ, ໂຮງໝໍແຂວງ ໃນຂອບເຂດທົ່ວປະເທດ ແລະ ຕາມຈຸດບໍລິການສັກວັກຊີນຕ່າງໆ ເພື່ອຄວາມປອດໄພຂອງທ່ານ ກໍຄືຄອບຄົວຂອງທ່ານ ແລະ ເພື່ອຄວາມປອດໄພຂອງທຸກໆຄົນໃນຊຸມຊົນ.

**ນສພ. ປະເທດລາວ 18/07/2022**

❑ ນັບແຕ່ ສປປລາວ ໄດ້ເຂົ້າເປັນສະມາຊິກອາຊຽນ ວັນທີ 23 ກໍລະກົດ 1997 ສປປລາວ ໄດ້ຮັບກຽດເປັນປະທານອາຊຽນມາແລ້ວ 2 ຄັ້ງ ຄື: ຄັ້ງທີ 1 ໃນປີ 2004-2005 ແລະ ຄັ້ງທີ 2 ໃນປີ 2016 ແລະ ສປປລາວ ຈະໄດ້ຮັບກຽດເປັນປະທານອາຊຽນອີກເປັນປີທີ 3 ໃນປີ 2024.

**ນສພ. ວຽງຈັນໃໝ່ 18/07/2022**

❑ ໃນປີ 2022 ຂະແໜງສວຍສາອາກອນໄດ້ຮັບຕົວເລກແຜນການທັງໝົດ 14.42 ຕື້ກີບ ຜ່ານການຈັດຕັ້ງປະຕິບັດຕົວຈິງໃນ 6 ເດືອນຕົ້ນປີ 2022 ສາມາດປະຕິບັດໄດ້ 6.513,82 ຕື້ກີບ ເທົ່າກັບ 45,2% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 9,6% ຫລື ປະມານ 1.487,8 ຕື້ກີບ.

**ນສພ. ວຽງຈັນໃຫມ່ 19/07/2022**

❑ ອີງຕາມບົດລາຍງານ ສະຖານະພາບປະຊາກອນໂລກ 2022 ສະແດງໃຫ້ເຫັນເຖິງຜົນກະທົບດ້ານສຸຂະພາບຈະເລີນພັນ ໂດຍສະເພາະຕໍ່ແມ່ຍິງ ແລະ ໄວໜຸ່ມ ທີ່ບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ການບໍລິການທາງດ້ານສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວໃນໄລຍະການລະບາດຂອງໂຄວິດ-19 ເຊິ່ງເຮັດໃຫ້ມີບັນຫາ ແລະ ອັດຕາການຖືພາທີ່ບໍ່ຕັ້ງໃຈທີ່ສູງຂຶ້ນ ໃນທົ່ວໂລກ ກໍຄື ໃນ ສປປລາວ ເຊິ່ງຈະນຳໄປສູ່ການເອົາລູກອອກທີ່ບໍ່ປອດໄພ ແລະ ບັນຫາສຸຂະພາບຂອງແມ່ ແລະ ເດັກນ້ອຍທີ່ຕາມມາ ການຖືພາທີ່ບໍ່ຕັ້ງໃຈແມ່ນມີເຖິງ 61% ແມ່ນຈະຢຸດຕິການຖືພາດ້ວຍການເອົາລູກອອກນັ້ນແມ່ນບັນຫາທີ່ສຳຄັນໜຶ່ງທີ່ຕ້ອງໄດ້ເອົາໃຈໃສ່ແກ້ໄຂຢ່າງຮີບດ່ວນ ເຊິ່ງເປັນສິ່ງທ້າທາຍທີ່ຈະຕ້ອງຮ່ວມແຮງຮ່ວມໃຈຂ້າມຜ່ານເພື່ອໃຫ້ບັນລຸການຈັດຕັ້ງປະຕິບັດແຜນດຳເນີນງານ ວ່າດ້ວຍປະຊາກອນ ແລະ ການພັດທະນາ (ICPD) ແລະ ວາລະການພັດທະນາແບບຍືນຍົງ ຮອດປີ 2030 ໂດຍສະເພາະ 3 ເປົ້າໝາຍຂອງການປ່ຽນແປງທີ່ສຳຄັນ ຄື: ຢຸດຕິການຕາຍຂອງແມ່, ຢຸດຕິຄວາມຕ້ອງການໃນການວາງແຜນຄອບຄົວທີ່ບໍ່ໄດ້ຕອບສະໜອງ, ລົບລ້າງຄວາມຮຸນແຮງໂດຍອີງໃສ່ເພດ.

**ນສພ. ວຽງຈັນໃໝ່ 21/07/2022**



## ປະທານ...

ຍາມິດຕະພາບ ແລະ ການຮ່ວມມື ລາວ-ຫວຽດນາມ ຄົບຮອບ 45 ປີ ທີ່ນະຄອນຫລວງວຽງຈັນ.

ໃນການພົບປະຄັ້ງນີ້, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ຄະນະຜູ້ແທນຂັ້ນສູງຫວຽດນາມ ທີ່ໄດ້ເດີນທາງມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມໝາຍສຳຄັນຂອງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ອ້າຍນ້ອງ, ພິເສດ ການມາຢ້ຽມຢາມຄັ້ງນີ້ ເປັນການນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີຮັກແພງອັນສະໜິດສະໜົມຂອງພັກ, ລັດ, ສະພາແຫ່ງຊາດ ຫວຽດນາມ ອ້າຍນ້ອງ ມາຍັງພັກ-ລັດ, ສະພາແຫ່ງຊາດລາວ ແລະ ຍັງໄດ້ຖືໂອກາດນີ້ຝາກຄວາມຢື້ຢາມຖາມຂ່າວໄປຍັງສະຫາຍ ເວືອງ ດິງ ເຫວະ ປະທານສະພາແຫ່ງຊາດຫວຽດນາມ ພ້ອມນັ້ນ, ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດອັນໃຫຍ່ຫລວງ ແລະ ຮອບດ້ານທີ່ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ ພາຍໃຕ້ການນຳພາອັນປີຊາສາມາດ, ສະຫລາດສ່ອງໃສຂອງພັກກອມມູນິດຫວຽດນາມ ໃນພາລະກິດປົດປ່ອຍຊາດ ໃນເມື່ອກ່ອນ ກໍຄືພາລະກິດປ່ຽນແປງໃໝ່ແຫ່ງການສ້າງສາພັດທະນາ ແລະ ປົກປັກຮັກສາປະເທດຊາດ ໃນປັດຈຸບັນ. ພ້ອມນີ້, ສອງຝ່າຍ ກໍໄດ້ຕີລາຄາສູງ ແລະ ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າບໍ່ວ່າຍຸກສະໄໝໃດ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ລາວ ແລະ ຫວຽດນາມ ກໍນັບມື້ນັບໄດ້ຮັບການເສີມຂະຫຍາຍໃຫ້ແຕກດອກອອກຜົນ ແລະ ເຂົ້າສູ່ລວງເລິກ ເຊິ່ງໄດ້ສະແດງອອກໃຫ້ເຫັນຄື ການໄປມາຫາສູ່ກັນ ບໍ່ວ່າຈະເປັນການນຳຂັ້ນສູງ, ຈົນຮອດບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນຂອງສອງປະເທດ ໄດ້ແລກປ່ຽນພົບປະການຢ້ຽມຢາມເຊິ່ງກັນ ແລະ ກັນ ຢ່າງເປັນປົກກະຕິ ເພື່ອສືບຕໍ່ຮັດແໜ້ນສາຍພົວພັນພິເສດ ແລະ ຊຸກຍູ້ການຮ່ວມມືໃຫ້ຂະຫຍາຍຕົວ ເຊິ່ງໄດ້ປະກອບສ່ວນເຮັດໃຫ້ມີຄວາມໃກ້ຊິດຫລາຍຂຶ້ນ, ມີຄວາມເຂົ້າອົກເຂົ້າໃຈເຊິ່ງກັນ ແລະ ກັນ ແລະ ເຮັດໃຫ້ການພົວພັນຮ່ວມມືໄດ້ຮັບການເສີມຂະຫຍາຍ ແລະ ແຕກດອກອອກຜົນຍິ່ງຂຶ້ນ, ສະເພາະໃນຂອບການຮ່ວມມືຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ ເຫັນວ່າສອງຝ່າຍໄດ້ເຮັດວຽກຮ່ວມກັນຢ່າງໃກ້ຊິດ, ໄດ້ມີການເສີມຂະຫຍາຍການພົວພັນຮ່ວມມື ແລະ ສາມາດນຳປະໂຫຍດຕົວຈິງ ມາສູ່ສອງອົງການນິຕິບັນຍັດ, ສະແດງອອກໃນການແລກປ່ຽນຢ້ຽມຢາມຜູ້ແທນຂັ້ນຕ່າງໆ, ຈັດສຳມະນາໃນຫົວຂໍ້ທີ່ຈຳເປັນສຳລັບອົງການນິຕິບັນຍັດ, ມີການສົ່ງສານຊົມເຊີຍ, ສານອວຍພອນເຊິ່ງກັນ ແລະ ກັນ ໃນໂອກາດວັນສຳຄັນຕ່າງໆຂອງຊາດ, ການສະໜັບສະໜູນຊ່ວຍເຫລືອ ແລະ ຮ່ວມມືກັນໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ໃນໂອກາດນີ້, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຂອບໃຈ ມາຍັງພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມ ອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫລືອອັນລ້ຳຄ່າ ແລະ ທັນການຕໍ່ ສປປລາວ ຕະຫລອດໄລຍະຜ່ານມາ. ພິເສດ ແມ່ນການຊ່ວຍເຫລືອອັນລ້ຳຄ່າ ເປັນຕົ້ນແມ່ນໂຄງການກໍ່ສ້າງຫໍສະພາແຫ່ງຊາດລາວຫລັງໃໝ່ ທີ່ມີຄວາມທັນສະໄໝທີ່ສຸດ, ສວຍງາມ ມີເອກະລັກຂອງວັດທະນະທຳ ສະຖາປັດຕະຍະກຳຂອງລາວທີ່ດີທີ່ສຸດ, ເປັນອາຄານທີ່ແໜ້ນໜາແຂງແຮງ ຈະໃຊ້ງານໄດ້ຍາວນານທີ່ສຸດ ແລະ ມີມູນຄ່າສູງທີ່ສຸດ ສຳລັບຕຶກຫລັງໜຶ່ງເທົ່າທີ່ເຄີຍມີມາ ຢູ່ປະເທດລາວ ເຖິງປັດຈຸບັນນີ້ ແລະ ຂໍຖືໂອກາດນີ້ ອວຍພອນໃຫ້ສະຫາຍ ຫວໍ ວັນ ເຖື້ອງ ແລະ ຄະນະຜູ້ແທນຂັ້ນສູງຫວຽດນາມ ຈົ່ງປະສົບຜົນສຳເລັດໃນການເດີນທາງມາຢ້ຽມຢາມ ສປປລາວ ໃນຄັ້ງນີ້, ອວຍພອນໃຫ້ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນຕະຫລອດການະນານ.

ໃນຕອນບ່າຍຂອງວັນດຽວກັນ, ສະຫາຍ ຫວໍ ວັນ ເຖື້ອງ ພ້ອມດ້ວຍຄະນະ ໄດ້ເດີນທາງໄປທີ່ອານຸສອນສະຖານ ປະທານ ໄກສອນ ພົມວິຫານ ເພື່ອເຂົ້າຮ່ວມພິທີວາງກະຕ່າດອກໄມ້ ເພື່ອສະແດງເຖິງຄວາມຮູ້ບຸນຄຸນອັນໃຫຍ່ຫລວງ ແລະ ຈິດຈຳລ້ຳລຶກເຖິງຄຸນງາມຄວາມດີທີ່ຫາອັນປຽບບໍ່ໄດ້, ຜູ້ເຊິ່ງກຳຄັນທຸງໜ້າຂອງຂະບວນການຮັກຊາດ ແລະ ປະຕິວັດ, ນັກປະຕິວັດຮຸ່ນໜຸ່ມຂອງພັກທີ່ຍອມເສຍສະຫລະເລືອດເນື້ອຕໍ່ສູ້ກູ້ຊາດຢ່າງພິລະອາດຫານ ພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ ຈົນສາມາດປົດປ່ອຍປະເທດຊາດ ແລະ ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ປວງຊົນລາວທັງຊາດ ຈົນມາເຖິງປັດຈຸບັນ. ຫລັງຈາກນັ້ນ, ກໍໄດ້ສືບຕໍ່ເຂົ້າຮ່ວມພິທີເປີດງານວາງສະແດງຮູບພາບການພົວພັນຮ່ວມມືສອງຊາດ ລາວ-ຫວຽດນາມ ແຕ່ອະດີດຈົນເຖິງປັດຈຸບັນ.

ໃນວັນດຽວກັນ, ສະຫາຍ ຫວໍ ວັນ ເຖື້ອງ ພ້ອມດ້ວຍຄະນະ ຍັງໄດ້ເດີນທາງໄປຢ້ຽມຢາມສະຫາຍ ຈູມມາລີ ໄຊຍະສອນ ອະດີດເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ແລະ ສືບຕໍ່ເຂົ້າຮ່ວມງານລ້ຽງຕ້ອນຮັບ ເຊິ່ງຈັດໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ.

## ເຝິກອົບຮົມ...

(ສພຊ) ເພື່ອຍົກສູງການທັນເປັນທັນສະໄໝໃນການນຳໃຊ້ອຸປະກອນສື່ສານໄອທີ ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ ກໍຄືການໄຫລວຽນຂໍ້ມູນຂ່າວສານສຳລັບອົງການພາກລັດໃຫ້ມີຄວາມວ່ອງໄວ ແລະ ປອດໄພທາງດ້ານຂໍ້ມູນຂ່າວສານ; ພ້ອມທັງເປັນການແນະນຳຂັ້ນຕອນວິທີການນຳໃຊ້, ການຕິດຕາມຮູບແບບຕ່າງໆໃຫ້ແກ່ພະນັກງານພາຍໃນສະພາແຫ່ງຊາດ ໃຫ້ສາມາດນຳໃຊ້ລະບົບສື່ສານຂອງພາກລັດເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງຂອງຕົນເອງໄດ້.

ໃນວັນທີ 12 ກໍລະກົດຜ່ານມາ, ທີ່ຫໍສະພາແຫ່ງຊາດ ໄດ້ມີກອງປະຊຸມເຜີຍແຜ່ ແລະ ຈັດເຝິກອົບຮົມການນຳໃຊ້ລະບົບສື່ສານຂອງພາກລັດ (G-Chat) ໃຫ້ພະນັກງານພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ເພັດພອນໃຈ ສິນລະປະກິດ ຫົວໜ້າຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ, ເຂົ້າຮ່ວມມີຄະນະກົມ, ວິຊາການພາຍໃນສະພາແຫ່ງຊາດ ແລະ ວິທະຍາກອນທີ່ມາຈາກສູນບໍລິຫານລັດດີຈິຕອນ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

ໃນກອງປະຊຸມ ຜູ້ເຂົ້າຮ່ວມໄດ້ຮັບຟັງການບັນຍາຍກ່ຽວກັບພາບລວມລະບົບການສື່ສານຂອງພາກລັດ ຫລື G-Chat; ແນະນຳການນຳໃຊ້ລະບົບສື່ສານພາກລັດທັງ 2 ຮູບແບບຄື: ນຳໃຊ້ຄອມພິວເຕີ ແລະ ໃນໂທລະສັບມືຖື; ແນະນຳການດາວໂຫລດ ແລະ ຕິດຕັ້ງແອັບພິເຄຊັນສື່ສານພາກລັດໃນ Android ແລະ IOS; ແນະນຳການເຂົ້າລະບົບສື່ສານພາກລັດເບື້ອງຕົ້ນ. ຈາກນັ້ນ, ກໍໄດ້ມີການແລກປ່ຽນຖາມ-ຕອບ ປະກອບຄຳຄິດຄຳເຫັນລະຫວ່າງນັກສຳມະນາກອນ ແລະ ວິທະຍາກອນ.

(ຂ່າວ: ກົງທະນູຄຳ, ພາບ: ສອນສັກ)

## ປະກອບ...

ປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ; ມີທ່ານປະທານກຳມາທິການບັນດາເຜົ່າ, ຮອງປະທານກຳມາທິການກົດໝາຍ, ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ຮອງປະທານກຳມາທິການບັນດາເຜົ່າ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ວິຊາການຂອງສະພາແຫ່ງຊາດ ເຂົ້າຮ່ວມ.

ໃນກອງປະຊຸມ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາປະກອບຄຳເຫັນຢ່າງຫລາກຫລາຍ ເພື່ອເຮັດໃຫ້ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການປະຕິບັດກົດໝາຍ ເຊິ່ງເປັນນິຕິກຳທີ່ມີຄວາມສຳຄັນ ແລະ ເປັນບ່ອນອີງໃຫ້ແກ່ວຽກງານຕິດຕາມກວດກາການປະເມີນຜົນການປະຕິບັດກົດໝາຍ ໃນຕໍ່ໜ້າ ແລະ ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຕາມຄຳເຫັນຂອງສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ນອກຈາກນັ້ນ, ກອງປະຊຸມຍັງໄດ້ຕີລາຄາຄືນກ່ຽວກັບການຕິດຕາມກວດກາການປະເມີນການປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ເພື່ອຖອດຖອນບົດຮຽນ ແລະ ວາງທິດທາງແຜນການໃນຕໍ່ໜ້າ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ WFD ( Westminster Foundation for Democracy).

(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)









# ກອງປະຊຸມສະໄໝສາມັນເທື່ອທີ 3 ສປນວ ຊຸດທີ II ຈະພິຈາລະນາຫລາຍບັນຫາສຳຄັນ




(ສພຊ) ໃນຕອນເຊົ້າຂອງວັນທີ 18 ກໍລະກົດ 2022 ຢູ່ທີ່ຫ້ອງປະຊຸມສຳນັກງານຫ້ອງວ່າການນະຄອນຫລວງວຽງຈັນ, ທ່ານ ນະຄະເສນ ສີຫາລາດ ເລຂາທິການສະພາປະຊາຊົນນະຄອນຫລວງວຽງຈັນ (ສປນວ) ໄດ້ຖະແຫລງຂ່າວຕໍ່ສື່ມວນຊົນເພື່ອແຈ້ງເຖິງພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກສຶກສາ, ປັນຍາຊົນ, ກຳມະກອນຊາວຜູ້ອອກແຮງງານ ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ຊາວນະຄອນຫລວງວຽງຈັນ ເພື່ອຊາບກ່ຽວກັບການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສປນວ ຊຸດທີ II ເຊິ່ງມາເຖິງປັດຈຸບັນນີ້ ການກະກຽມຄວາມພ້ອມໃນດ້ານຕ່າງໆຂອງກອງປະຊຸມແມ່ນມີຄວາມຄົບຖ້ວນ, ສອດຄ່ອງກັບກົດໝາຍ ໂດຍກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສປນວ ຈະດຳເນີນຂຶ້ນໃນລະຫວ່າງວັນທີ 21-26 ກໍລະກົດ 2022 ຈຳນວນ 4 ວັນທາງລັດຖະການ ຢູ່ທີ່ຫ້ອງປະຊຸມສຳນັກງານອົງການປົກຄອງນະຄອນຫລວງວຽງຈັນ, ກອງປະຊຸມຄັ້ງນີ້ ເປັນກອງປະຊຸມທີ່ມີຄວາມໝາຍສຳຄັນຫລາຍຢ່າງຍິ່ງ ເປັນການຢັ້ງຢືນເຖິງຄວາມເປັນເອກະພາບ ແລະ ຄວາມເຊື່ອມັ່ນຂອງປວງຊົນຊາວນະຄອນຫລວງ ຕໍ່ການນຳພາຂອງພັກ-ລັດ ແມ່ນໝາກຜົນແຫ່ງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງອົງຄະນະພັກນະຄອນຫລວງວຽງຈັນ ແລະ ເປັນການສະຫລຸບຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນດານິຕິກຳຕ່າງໆໃນໄລຍະ 6 ເດືອນຕົ້ນປີ 2022 ຜ່ານມາ.

ປະຕິບັດຕາມມາດຕາ 60 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ກອງປະຊຸມຄັ້ງນີ້ ຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງນະຄອນຫລວງວຽງຈັນ ຄື: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າຄອງນະຄອນຫລວງວຽງຈັນ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງນະຄອນຫລວງວຽງຈັນ; ຮັບຟັງການລາຍງານຊີ້ແຈງບາງວຽກງານສຳຄັນຂອງອົງການປົກຄອງນະຄອນຫລວງວຽງຈັນ: ບັນຫາການຄວບຄຸມລາຄາສິນຄ້າ, ແຜນການຄຸ້ມຄອງລາຄາສິນຄ້າໃນອານາຄົດ ແລະ ການສົ່ງເສີມການຜະລິດເປັນສິນຄ້າພາຍໃນ; ບັນຫາຄວາມຊັກຊ້າການຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງແຕ່ ບ້ານດອນນົກຂຸ້ມ ຫາບ້ານສ້າງເວີຍ ແລະ ບ້ານດົງສະຫວາດ; ບັນຫາການແກ້ໄຂນ້ຳຖ້ວມຂັງ ຈາກໂຄງການກໍ່ສ້າງເສັ້ນທາງເລກທີ 13 ເໜືອ ແລະ ໂຄງການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ວັງວຽງ, ໂຄງການທາງລົດໄຟລາວ-ຈີນ ໃນຂອບເຂດເມືອງນາຊາຍທອງ; ບັນຫາການຊົດເຊີຍທີ່ດິນ ໃຫ້ແກ່ຜູ້ທີ່ຖືກຜົນກະທົບຈາກໂຄງການທ່າບົກ-ທ່ານາແລ້ງ ແລະ ເຂດໂລຈິສຕິກ; ບັນຫາຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການນ້ຳເປື້ອນ ນະຄອນຫລວງວຽງຈັນ ພາຍໃຕ້ເງິນກູ້ລັດຖະບານຣົງກາລີ; ບັນຫາການແກ້ໄຂການອອກໃບຕາດິນຊັກຊ້າ ຕາມທາງສຽງຂອງປະຊາຊົນ; ບັນຫາການລົບລ້າງໃບຕາດິນ ຈຳນວນ 17 ຕອນ ເຂດບຶງສາລະຄຳ, ເຂດສຳປະທານຂອງບໍລິສັດມິດຕະພາບການກະເສດ; ບັນຫາການຄຸ້ມຄອງຄົນຕ່າງປະເທດ ຢູ່ນະຄອນຫລວງວຽງຈັນ (ຍົກໃຫ້ເຫັນເຖິງການຄຸ້ມຄອງຕົວຈິງ, ບັນຫາທີ່ເກີດຂຶ້ນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຄຸ້ມຄອງ, ການຕິດຕາມກວດກາ ແລະ ການແກ້ໄຂບັນຫາ ໂດຍສະເພາະທາງດ້ານນິຕິກຳ); ຮັບຟັງການລາຍງານຊີ້ແຈງກ່ຽວກັບການແກ້ໄຂບັນຫາກອງທຶນຢາເສບຕິດ ນະຄອນຫລວງວຽງຈັນ (ຍົກໃຫ້ເຫັນເຖິງທີ່ມາຂອງກອງທຶນ, ການນຳຈຳນວນເງິນຄືນ, ການຄຸ້ມຄອງ ແລະ ການນຳໃຊ້ ໂດຍສະເພາະແມ່ນການນຳໃຊ້ ເຂົ້າໃນການບຳບັດຜູ້ຕິດຢາເສບຕິດ ເກີດຜົນຫຍັງແດ່); ຮັບຟັງການລາຍງານ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ກ່ຽວກັບການຈັດຕັ້ງຜັນຂະຫຍາຍການຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ ຢູ່ນະຄອນຫລວງ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 (ລົງເລິກ 6 ວຽກຈຸດສຸມ ຕາມສິດ ແລະ ໜ້າທີ່ຂອງຕົນ ແລະ ການດຳເນີນຄະດີຢາເສບຕິດ, ໃນນັ້ນ ຍົກໃຫ້ເຫັນເຖິງຂັ້ນຕອນວິທີການດຳເນີນຄະດີ, ຈຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງ); ຮັບຟັງການລາຍງານຂອງພະແນກຍຸຕິ ກ່ຽວກັບການຈັດຕັ້ງຜັນຂະຫຍາຍການຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ ຢູ່ນະຄອນຫລວງ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021; ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສປນວ; ຮັບຟັງການລາຍງານການຕິດຕາມກວດກາການນຳໃຊ້ 7 ມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງທີ່ບໍ່ຖືກຕ້ອງຕາມກົດໝາຍ ໃນໄລຍະ 6 ເດືອນຕົ້ນປີ 2022 ຂອງອົງການໄອຍາການປະຊາຊົນນະຄອນຫລວງວຽງຈັນ; ຮັບຟັງການລາຍງານຂອງອົງການໄອຍາການປະຊາຊົນນະຄອນຫລວງວຽງຈັນ ກ່ຽວກັບການຈັດຕັ້ງຜັນຂະຫຍາຍການຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ ຢູ່ນະຄອນຫລວງ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 (ລົງເລິກການດຳເນີນຄະດີຢາເສບຕິດ ໂດຍຍົກໃຫ້ເຫັນຈຳນວນຄະດີ ແລະ ການອອກຄຳສັ່ງຕ່າງໆ); ຮັບຟັງການລາຍງານຂອງສານປະຊາຊົນ ນະຄອນຫລວງວຽງຈັນ ກ່ຽວກັບການຈັດຕັ້ງຜັນຂະຫຍາຍການຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ ຢູ່ນະຄອນຫລວງ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫລວງ ສະບັບເລກທີ 841/ຈນວ, ລົງວັນທີ 25 ຕຸລາ 2021 (ລົງເລິກການດຳເນີນຄະດີຢາເສບຕິດ).

ນອກຈາກນັ້ນ, ກອງປະຊຸມຍັງຈະໄດ້ຮັບຟັງການລາຍງານຊີ້ແຈງຈາກສະມາຊິກອົງການປົກຄອງນະຄອນຫລວງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ ຢູ່ໃນກອງປະຊຸມຕື່ມອີກ.

ເປົ້າໝາຍທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ປະກອບດ້ວຍສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ, ເຈົ້າຄອງ-ຮອງເຈົ້າຄອງ, ສະມາຊິກອົງການປົກຄອງ, ອົງການລັດທຽບເທົ່າພະແນກ ຂັ້ນນະຄອນຫລວງ, ພາກສ່ວນຂົງເຂດຕຸລາການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ເຈົ້າເມືອງ, ບັນດາພາກສ່ວນທຸລະກິດ ແລະ ພາກສ່ວນຮັບຜິດຊອບທີ່ກ່ຽວຂ້ອງເຂົ້າຮ່ວມ ປະມານ 150 ກວ່າທ່ານ.

ໃນນາມຕາງໜ້າຄະນະປະຈຳ ສປນວ ຂໍເຊີນຊວນບັນດາອົງການຈັດຕັ້ງພັກ-ລັດ, ພະນັກງານ, ທະຫານ, ຕຳຫລວດ, ອົງການຈັດຕັ້ງສັງຄົມທຸກພາກສ່ວນ ຕະຫລອດຮອດພໍ່ແມ່ປະຊາຊົນບັນດາເຜົ່າຊາວນະຄອນຫລວງວຽງຈັນ ຈົ່ງໃຫ້ການຕິດຕາມຂ່າວສານຜ່ານສື່ສິ່ງພິມ, ສື່ອີເລັກໂຕຣນິກ, ວິທະຍຸກະຈາຍສຽງ, ໂທລະພາບແຫ່ງຊາດ ແລະ ໂທລະພາບນະຄອນຫລວງວຽງຈັນ ທີ່ຈະເຜີຍແຜ່ໃຫ້ບັນດາທ່ານໄດ້ຮັບຊາບຢ່າງກວ້າງຂວາງ.

ນອກຈາກນັ້ນ, ບັນດາທ່ານສາມາດມີຄຳເຫັນ ຫລື ຄຳສະເໜີ ຜ່ານທາງໂທລະສັບສາຍດ່ວນໝາຍເລກ 021 260 242 ຫລື 1156 ຂອງ ສປນວ ໃນຄັ້ງນີ້ດ້ວຍ.

# ການເຄື່ອນໄຫວຂອງຄະນະຊາວໜຸ່ມ ໄຊສົມບູນ



(ສພຊ) ຕົ້ນເດືອນກໍລະກົດ 2022 ຄະນະຮາກຖານຊາວໜຸ່ມສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ພ້ອມດ້ວຍສະມາຊິກ ໄດ້ຈັດກອງປະຊຸມຂຶ້ນທີ່ຫ້ອງປະຊຸມຂອງຕົນ ພາຍໃຕ້ການເຂົ້າຮ່ວມເປັນປະທານຂອງສະຫາຍ ຄຳພູທອນ ວົງພະຈັນ ເລຂາໜ່ວຍພັກ, ຮອງປະທານ ສພຂ ແລະ ມີສະຫາຍ ເຢ່ຍຊື່ງ ຫວັງທ່າວ ເລຂາຄະນະບໍລິຫານງານຊາວໜຸ່ມແຂວງ, ບັນດາຄະນະເລຂາ ຕະຫລອດຮອດສະມາຊິກຊາວໜຸ່ມ ສພຂ ໄຊສົມບູນ ເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ທີ່ປະຊຸມໄດ້ຮັບຟັງບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ 2022 ຂອງໜ່ວຍຮາກຖານຊາວໜຸ່ມ ສພຂ ໂດຍສະຫາຍ ພູວັນບຸນທະຍາ ຮອງເລຂາຊາວໜາວໜຸ່ມ, ຮອງຫົວໜ້າຂະແໜງຍຸຕິທຳ ໂດຍສະຫາຍໄດ້ໃຫ້ຮູ້ເຖິງຜົນສຳເລັດທີ່ຮາກຖານຊາວໜຸ່ມໜ່ວຍ ສພຂ ສາມາດຍາດມາໄດ້ ເຊິ່ງສະແດງໃຫ້ເຫັນຄື: ເປັນເຈົ້າການໃນການກະກຽມເອກະສານ ແລະ ຮັບໃຊ້ກອງປະຊຸມຕ່າງໆຄື: ກອງປະຊຸມຄັ້ງປະຖົມມລືກ ຊຸດທີ II ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ໄດ້ສຳເລັດ; ສຳເລັດການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 4 ບຸກຂອງໜ່ວຍຮາກຖານຊາວໜຸ່ມ ສພຂ ໄຊສົມບູນ ປະຈຳປີ 2021; ສຳເລັດກອງປະຊຸມແຮກສ່ຽວ ລະຫວ່າງໜ່ວຍຮາກຖານຊາວໜຸ່ມ ສພຂ, ຮາກຖານຊາວໜຸ່ມພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ຮາກຖານຊາວໜຸ່ມພະແນກເຕັກໂນໂລຊີ ແລະ ການສື່ສານ; ໄດ້ເຂົ້າຮ່ວມກອງປະຊຸມສ່ອງແສງປະຈຳເດືອນ ທີ່ໜ່ວຍຮາກຖານຊາວໜຸ່ມພະແນກອ້ອມຂ້າງແຂວງຈັດຂຶ້ນ; ສະຫລຸບຜົນການເຄື່ອນໄຫວວຽກງານຂອງໜ່ວຍຮາກຖານປະຈຳເດືອນ, ປະຈຳເດືອນ, ປະຈຳ 3 ເດືອນ, ປະຈຳ 6 ເດືອນ ແລະ ປະຈຳປີ; ເກັບ-ເສຍເງິນບຳລຸງສະຖິຕິ ປີ 2021 ແລະ ສົ່ງໃຫ້ຂັ້ນເທິງຕາມລະບຽບການ; ເຂົ້າຮ່ວມ ແລະ ສ້າງຂະບວນການກິລາບານເຕະ ກັບບັນດາພະແນກການ, ອົງການຕ່າງໆ ຈຳນວນ 5 ຄັ້ງ ແລະ ກິລາເປຕັງ 2 ຄັ້ງ; ເຂົ້າຮ່ວມຂະບວນການອະນາໄມເສັ້ນທາງ, ອາຄານ, ສຳນັກງານຕ່າງໆຂອງແຂວງ ຕາມແຈ້ງການຂອງຄະນະບໍລິຫານງານຊາວໜຸ່ມແຂວງ ຈຳນວນ 10 ຄັ້ງ ມີຜູ້ເຂົ້າຮ່ວມຈຳນວນ 173 ເທື່ອຄົນ; ໄດ້ຊຸກຍູ້ເຄື່ອງອຸປະໂພກ-ບໍລິໂພກ ໃຫ້ຄະນະສະເພາະກິດ ເພື່ອປ້ອງກັນຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຢູ່ແຂວງໄຊສົມບູນ 2 ຄັ້ງ ແລະ ອອກແຮງງານຕາມສຳນັກງານຂອງຕົນ ຈຳນວນ 16 ຄັ້ງ ມີຜູ້ເຂົ້າຮ່ວມ 246 ເທື່ອຄົນ.

ໃນໂອກາດນີ້, ສະຫາຍ ເຢ່ຍຊື່ງ ຫວັງທ່າວ ເລຂາຄະນະບໍລິຫານງານຊາວໜຸ່ມ ໄດ້ມີຄຳເຫັນ ເຊິ່ງສະຫາຍໄດ້ຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນສຳເລັດທີ່ໜ່ວຍຮາກຖານຊາວໜຸ່ມ ສພຂ ໄດ້ສູ້ຊົນຈົນສາມາດຍາດໄດ້ຜົນງານຫລາຍຢ່າງ ທີ່ກ່າວມາຂ້າງເທິງນີ້ ແລະ ສະຫາຍຍັງໄດ້ຊຸກຍູ້ສົ່ງເສີມໃຫ້ສືບຕໍ່ປະຕິບັດຈັດຕັ້ງໃຫ້ໄດ້ຮັບຜົນດີຂຶ້ນຕື່ມ ທາງດ້ານວຽກງານອົງການຈັດຕັ້ງມະຫາຊົນ. ນອກນັ້ນ, ສະຫາຍ ຄຳພູທອນ ວົງພະຈັນ ຍັງໄດ້ມີຄຳໂອ້ລົມຕໍ່ກອງປະຊຸມ ເຊິ່ງມີເນື້ອໃນບາງຕອນວ່າ: ໄຊສົມບູນ ຈະກ້າວໜ້າໄດ້ກໍ່ຕໍ່ເມື່ອມີຄະນະພັກເປັນແກນນຳ ແລະ ມີຊາວໜຸ່ມທີ່ເຂັ້ມແຂງດັ່ງນົກອິນຊີ ທີ່ບໍ່ຫວັ່ນໄຫວຕໍ່ພາຍຸລົມແດງ ໃຫ້ສະມາຊິກທຸກສະຫາຍ ຈົ່ງຮັດແໜ້ນຄວາມສາມັກຄີ, ປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ດີຂຶ້ນເລື້ອຍໆ ເພື່ອເປັນພະນັກງານສືບທອດໃນຕໍ່ໜ້າ.

ກ່ອນໜ້ານີ້, ຄະນະຮາກຖານຊາວໜຸ່ມ 3 ໜ່ວຍແຮກສ່ຽວຄື: ຄະນະຮາກຖານຊາວໜຸ່ມໜ່ວຍ ສພຂ, ຄະນະຮາກຖານຊາວໜຸ່ມໜ່ວຍພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ຄະນະຮາກຖານຊາວໜຸ່ມໜ່ວຍພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ ພ້ອມດ້ວຍສະມາຊິກຊາວໜຸ່ມຂອງຕົນ ໄດ້ຮັດແໜ້ນຄວາມສາມັກຄີກັນເພີ່ມຕື່ມອີກຂັ້ນໜຶ່ງ.

ໂດຍຄະນະຮາກຖານຊາວໜຸ່ມ 3 ໜ່ວຍດັ່ງກ່າວ ໄດ້ລະດົມທຶນຮອນ ແລະ ໂຮມຈິດໂຮມໃຈ ມີວັດຖຸອຸປະກອນຈຳນວນໜຶ່ງ ທີ່ໄດ້ແບ່ງປັນນ້ຳໃຈ ພ້ອມທັງເດີນທາງ ເພື່ອເຂົ້າຊ່ວຍເຫລືອ ແລະ ມອບເຄື່ອງບໍລິໂພກ ໃຫ້ແກ່ພໍ່ແມ່ປະຊາຊົນບັນດາເຜົ່າ ຫລື ຄອບຄົວທີ່ທຸກຍາກ ໃນ 3 ບ້ານທີ່ເມືອງອະນຸວົງ, ແຂວງໄຊສົມບູນ ດ້ວຍຕົນເອງ ເພື່ອບັນເທົາທຸກຄື: ປະຊາຊົນບ້ານອ່າວເໜືອ 3 ຄອບຄົວ, ປະຊາຊົນບ້ານອ່າວກາງ 1 ຄອບຄົວ ແລະ ປະຊາຊົນບ້ານອ່າວໃຕ້ 2 ຄອບຄົວ; ວັດຖຸ ຫລື ເຄື່ອງບໍລິໂພກທີ່ນຳໄປມອບໃຫ້ແກ່ປະຊາຊົນຜູ້ທຸກຍາກນັ້ນ ປະກອບມີ ຜ້າຫົ່ມ, ໝອນ, ສາດ, ໝີ່, ນ້ຳຢາລ້າງຖ້ວຍ ພ້ອມວັດຖຸອຸປະກອນການຮຽນ ຂອງເດັກນ້ອຍຄື: ປຶ້ມ, ບິກ, ສໍ ແລະ ນອກນັ້ນ ຍັງມີເຄື່ອງນຸ່ງຫົ່ມມືສອງຈຳນວນໜຶ່ງ ເພື່ອມອບໃຫ້ຄອບຄົວດັ່ງກ່າວ ມູນຄ່າທັງໝົດລວມເປັນເງິນຈຳນວນ 3 ລ້ານກວ່າກີບ.

ໃນການເຄື່ອນໄຫວມອບເຄື່ອງດັ່ງກ່າວ ຄະນະຊາວໜຸ່ມທັງ 3 ພາກສ່ວນໄດ້ພົວພັນຫານາຍບ້ານທັງ 3 ບ້ານ ເຊິ່ງນາຍບ້ານໄດ້ນຳພາຄະນະເດີນທາງ ແລະ ມອບເຄື່ອງໃຊ້ພາຍໃນຄອບຄົວ ໃຫ້ແກ່ຄອບຄົວຜູ້ທຸກຍາກຮອດເຮືອນຂອງຜູ້ກ່ຽວໂດຍກົງ.

(ນາງ ອຳໄພພອນ ແກ້ວວິໄລ)



## ໃນໄລຍະ 3 ເດືອນ ໜ່ວຍກຳມະບານ ສພຂ ຊຽງຂວາງ ມີຜົນງານຫລາຍດ້ານ



(ສພຊ) ໃນວັນທີ 30 ມິຖຸນາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ, ໜ່ວຍກຳມະບານ ສພຂ ຊຽງຂວາງ ໄດ້ເປີດກອງປະຊຸມປະຈຳ 3 ເດືອນ (4.5.6) ປີ 2022 ໂດຍການເປັນປະທານຂອງ ທ່ານ ແສງເດືອນ ຈັນທະລັງສີ ເລຂາໜ່ວຍພັກ ສພຂ, ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສພຂ ຊຽງຂວາງ, ມີຄະນະໜ່ວຍກຳມະບານ ແລະ ສະມາຊິກກຳມະບານ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມໄດ້ສັງເກດຄືນການຈັດຕັ້ງປະຕິບັດວຽກງານ 3 ເດືອນ (4.5.6) ປີ 2022 ຜ່ານມາ ຂອງໜ່ວຍກຳມະບານທັງເປັນການຕຳນິສິ່ງຂາວສະມາຊິກພາຍໃນໜ່ວຍດ້ວຍກັນ. ໃນທີ່ປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳ 3 ເດືອນ (4.5.6) ແລະ ທິດທາງແຜນການ 3 ເດືອນ (7.8.9) ປີ 2022 ຂອງໜ່ວຍກຳມະບານ ສພຂ ຊຽງຂວາງ ເຊິ່ງຄະນະໜ່ວຍກຳມະບານ ສພຂ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກກຳມະບານ ໃຫ້ເຊື່ອໝັ້ນຕໍ່ການນຳພາຂອງພັກມີຄວາມສາມັກຄີພາຍໃນ, ເອົາໃຈໃສ່ຈັດຕັ້ງເຜີຍແຜ່ຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ເອກະສານທີ່ສຳຄັນຂອງອົງການຈັດຕັ້ງຕ່າງໆ, ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ, ຕ້ອນຮັບພົນລະເມືອງ, ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນບັນດາເຜົ່າ, ເປັນເສນາທິການເກັບກຳຂໍ້ມູນດ້ານຕ່າງໆ, ຂຽນຂ່າວອອກລາຍການວິທະຍຸກະຈາຍສຽງ, ໄດ້ພ້ອມກັນສຸມໃສ່ເຂົ້າຮ່ວມການສ້າງຂະບວນກິລາ, ຂະບວນການອອກແຮງງານຕ່າງໆ ຢູ່ພາຍໃນ ແລະ ຮ່ວມກັບພະແນກການອອ້ມຂ້າງແຂວງຕ້ອນຮັບວັນສຳຄັນຕ່າງໆ ແລະ ທິດທາງແຜນການໃນ 3 ເດືອນ (7.8.9) ປີ 2022 ໜ່ວຍກຳມະບານສະພາປະຊາຊົນແຂວງຈະສືບຕໍ່ສຶກສາອົບຮົມດ້ານການເມືອງ-ແນວຄິດໃຫ້ສະມາຊິກກຳມະບານ, ສືບຕໍ່ປັບປຸງສະມາຊິກພາຍໃນໃຫ້ເຂັ້ມແຂງເພື່ອກຽມພ້ອມຮັບໃຊ້ໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານລາວໃຫ້ໄດ້ 95% ຂຶ້ນໄປ, ສືບຕໍ່ສ້າງສະມາຊິກຜູ້ດີເດັ່ນເພື່ອນຳສະເໜີຄະນະພັກຕິດຕາມເປົ້າໝາຍມະຫາຊົນຜູ້ກ້າວໜ້າເພື່ອຂະຫຍາຍເຂົ້າເປັນສະມາຊິກພັກ, ສ້າງເງື່ອນໄຂໃຫ້ສະມາຊິກໄດ້ໄປຍົກລະດັບທາງດ້ານວິຊາສະເພາະ, ທິດສະດີການເມືອງການປົກຄອງ ແລະ ພາສາຕ່າງປະເທດຕາມເງື່ອນໄຂຕົວຈິງ.

ໃນຕອນທ້າຍ, ທ່ານ ແສງເດືອນ ຈັນທະລັງສີ ໄດ້ມີຄຳເຫັນຍ້ອງຍໍຕໍ່ຜົນງານທີ່ໜ່ວຍກຳມະບານສາມາດຈັດຕັ້ງປະຕິບັດມາໄດ້ໃນໄລຍະຜ່ານມາ ແລະ ທ່ານຍັງມີຄຳເຫັນໂອ້ລົມຕໍ່ສະມາຊິກກຳມະບານທຸກ ໃຫ້ສືບຕໍ່ສຶກສາອົບຮົມດ້ານການເມືອງ-ແນວຄິດ, ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຂອງຕົນຢ່າງຕັ້ງໜ້າ, ປັບປຸງແບບແຜນວິທີເຮັດວຽກຂອງຕົນໃຫ້ມີຄວາມກ້າວໜ້າກວ່າເກົ່າ, ເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນ ຫາຄວາມຮູ້ຄວາມສາມາດເພື່ອພັດທະນາຕົນເອງ ແລະ ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີພາຍໃນໜ່ວຍໃຫ້ແໜ້ນແຟ້ນກວ່າເກົ່າ.

(ນາງ ສຸກສະຫວັນ ອິນທະແສງ)

## ສພຂ ຫລວງນ້ຳທາ ມອບ-ຮັບວຽກງານຂອງຄະນະເລຂາທິການ



(ສພຊ) ໃນເດືອນມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ຈັດພິທີມອບ-ຮັບວຽກງານຂອງຄະນະເລຂາທິການ ໂດຍການເປັນປະທານຂອງທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ຮອງປະທານ ສພຂ; ມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານ-ລັດຖະກອນ ເຂົ້າຮ່ວມທັງໝົດ 32 ທ່ານ ຍິງ 13 ທ່ານ.

ໃນພິທີ, ໄດ້ຮັບຟັງການຜ່ານຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 343/ຈຂ, ລົງວັນທີ 6 ມິຖຸນາ 2022 ວ່າດ້ວຍການອະນຸມັດໃຫ້ພະນັກງານ-ລັດຖະກອນ ອອກພັກຜ່ອນຮັບນະໂຍບາຍອຸດໜຸນ-ບຳນານ ເຊິ່ງເຈົ້າແຂວງໆຫລວງນ້ຳທາໄດ້ຕົກລົງອະນຸມັດໃຫ້ທ່ານ ປອ. ໄຊສີງຄາມ ພິມມະສອນ ຮອງເລຂາທິການ ສພຂ ອອກພັກຜ່ອນຮັບນະໂຍບາຍອຸດໜຸນບຳນານ. ພ້ອມນັ້ນ, ທ່ານ ປອ. ໄຊສີງຄາມ ພິມມະສອນ ໄດ້ຂຶ້ນຜ່ານບົດລາຍງານການເຄື່ອນໄຫວວຽກງານຢູ່ພາຍໃນ ສພຂ ຫລວງນ້ຳທາ ໃນໄລຍະຜ່ານມາ. ຫລັງຈາກນັ້ນ, ໄດ້ເຊັນບົດບັນທຶກມອບ-ຮັບໜ້າທີ່ວຽກງານຂອງຄະນະເລຂາທິການ ສພຂ ຢ່າງເປັນທາງການ ລະຫວ່າງທ່ານ ປອ. ໄຊສີງຄາມ ພິມມະສອນ ແລະ ທ່ານ ມີໄຊ ມີວິໄລ ເລຂາທິການ ສພຂ.

ໃນຕອນທ້າຍ, ທ່ານ ນາງ ອຸ່ນຫລ້າ ອ້ຽງລໍລາດ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງທ່ານ ປອ. ໄຊສີງຄາມ ພິມມະສອນ ໃນໄລຍະຜ່ານມາ ທີ່ມີຜົນງານສຳເລັດຫລາຍດ້ານ ໂດຍສະເພາະໄດ້ເອົາໃຈໃສ່ຊີ້ນຳໆພາພະນັກງານ-ລັດຖະກອນໃນຂົງເຂດທີ່ຕົນຮັບຜິດຊອບສາມາດຈັດຕັ້ງປະຕິບັດວຽກງານໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ, ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ເຊິ່ງເປັນການປະກອບສ່ວນສຸມທຸກສະຕິປັນຍາເຂົ້າໃນວຽກງານສ້າງສາ ແລະ ພັດທະນາປະເທດຊາດ.

(ນາງ ອຳພອນ ສີປະເສີດ)

## ສພຂ ອັດຕະປື ເຄື່ອນໄຫວວຽກງານຕິດຕາມກວດກາ ແລະ ກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ເພື່ອຮັບປະກັນໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດວຽກງານວັດທະນະທຳ-ສັງຄົມ ຕາມມະຕິທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ຊຸດທີ II ໃຫ້ໄດ້ບັນລຸຕາມຄາດໝາຍທີ່ວາງໄວ້ ພ້ອມທັງເປັນການຊຸກຍູ້ ແລະ ເກັບກຳຂໍ້ມູນ ຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງ, ບັນດາປາກົດການຫຍໍ້ທໍ້ຕ່າງໆ ແລະ ບັນຫາທາງສຽງສັງຄົມ ເພື່ອເປັນຂໍ້ມູນພື້ນຖານນຳໄປຄົ້ນຄວ້າພິຈາລະນາ ເຂົ້າໃນວຽກງານ ແລະ ລາຍງານຕໍ່ຄະນະປະຈຳ ສພຂ.

ເມື່ອທ້າຍເດືອນມິຖຸນາຜ່ານມາ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສພຂ ອັດຕະປື ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ 2022 ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຢູ່ເມືອງຊານໄຊ ນຳໂດຍທ່ານ ແຫວນຄຳ ປະທຸມມະແສງ ປະທານ ຄວສຜ ພ້ອມດ້ວຍຄະນະ; ເຂົ້າຮ່ວມມີທ່ານ ບຸນເນັມ ໄຊຍະເສັ້ມ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຊານໄຊ, ມີຮອງເຈົ້າເມືອງ ແລະ ຕາງໜ້າບັນດາຫ້ອງການໃນຂົງເຂດວັດທະນະທຳ-ສັງຄົມ.

ໂອກາດດັ່ງກ່າວ, ໄດ້ຮັບຟັງໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ 2022 ໃນຂົງເຂດວັດທະນະທຳສັງຄົມ ຂອງເມືອງ ໂດຍສະເພາະບັນດາຄາດໝາຍ, ບັນດາຕົວຊີ້ວັດ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ແລະ ມາດຕະການຕ່າງໆໃນການຈັດຕັ້ງປະຕິບັດວຽກງານ ແລະ ຮັບຟັງຈາກບັນດາຂະແໜງການທີ່ກ່ຽວຂ້ອງຂອງເມືອງ ເປັນຕົ້ນແມ່ນຂົງເຂດວຽກງານສຶກສາ ແລະ ກິລາ, ຂົງເຂດສາທາລະນະສຸກ, ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ, ຂົງເຂດຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ, ຂົງເຂດພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ. ພ້ອມນັ້ນ, ກໍໄດ້ພ້ອມກັນແລກປ່ຽນຄຳຄິດຄຳເຫັນຢ່າງມີຈຸດສຸມ ແລະ ກົງໄປກົງມາ.

ໃນໄລຍະດຽວກັນ, ສພຂ ອັດຕະປື ໄດ້ຈັດກອງປະຊຸມປຶກສາຫາລືໃນການກະກຽມກອງປະຊຸມສະໄໝສາມັນເທື່ອ 3 ຂອງ ສພຂ ຊຸດທີ II ທີ່ ສພຂ ໂດຍການເຂົ້າຮ່ວມຂອງທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການ ສພຂ, ມີບັນດາທ່ານຄະນະກຳມະການ, ຄະນະເລຂາທິການ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຂ.

ກອງປະຊຸມ, ໄດ້ແລກປ່ຽນຄົ້ນຄວ້າປຶກສາຫາລື ຕໍ່ກັບການກະກຽມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ເປັນຕົ້ນແມ່ນດ້ານເນື້ອໃນ, ດ້ານພິທີການແລະຮັບແຂກ, ດ້ານງົບປະມານ ແລະ ການເງິນ, ດ້ານໂຄສະນາປະຊາສຳພັນ ແລະ ໂທລະສັບສາຍດ່ວນ, ດ້ານປ້ອງກັນຄວາມສະຫງົບ ແລະ ຮັກສາສຸຂະພາບ ເພື່ອຮັບປະກັນເຮັດໃຫ້ກອງປະຊຸມທີ່ຈະຈັດຂຶ້ນມີຄວາມຮັດກຸມດ້ານປະລິມານ ແລະ ຄຸນນະພາບ ສາມາດດຳເນີນທັນຕາມກຳນົດເວລາທີ່ກຳນົດໄວ້.

(ວິນັດ)

## ທະນາຄານແຫ່ງ ສປປລາວ ພາກເໜືອ ແລະ ບໍລິສັດ ລາວຊິນຫລິງ ມອບຄອມໃຫ້ ສພຂ ອຸດົມໄຊ



(ສພຊ) ທ້າຍເດືອນມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ທ່ານ ແອ ສ້ອຍສຸວັນ ຮັກສາການຫົວໜ້າທະນາຄານແຫ່ງ ສປປລາວ ພາກເໜືອແຂວງອຸດົມໄຊ ພ້ອມດ້ວຍຄະນະ ໄດ້ມອບຄອມພິວເຕີຈຳນວນ 2 ຊຸດ ແລະ ບໍລິສັດ ລາວຊິນຫລິງ ຂຸດສາຫະກຳບໍ່ແຮ່ ຈຳກັດ ໄດ້ມອບຄອມພິວເຕີ 1 ຊຸດ ໃຫ້ ສພຂ ເຊິ່ງຕາງໜ້າຮັບໂດຍແມ່ນທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ, ບັນດາທ່ານຄະນະປະຈຳ ສພຂ ແລະ ຄະນະເລຂາທິການ ສພຂ ເຂົ້າຮ່ວມ.

ໂອກາດດຽວກັນນີ້, ທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ ໄດ້ຕາງໜ້າຄະນະປະຈຳ ສພຂ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ໄດ້ສະແດງຄວາມຂອບໃຈມາຍັງ 2 ພາກສ່ວນດັ່ງກ່າວໃຫ້ການຊ່ວຍເຫລືອດ້ານອຸປະກອນ ເພື່ອປະກອບສ່ວນໃນວຽກງານ ສະພາປະຊາຊົນແຂວງ ສພຂ ຄັ້ງນີ້ ທັງສັນຍາວ່າຈະນຳໃຊ້ຄອມພິວເຕີດັ່ງກ່າວ ເຂົ້າໃນການເຄື່ອນໄຫວວຽກງານໃຫ້ເກີດຜົນປະໂຫຍດສູງສຸດ.

(ແສງພອນ ອິນນະລົງ)

ǀ ສາຍດ່ວນ 1510 ເພື່ອປົກປ້ອງຜູ້ຊົມໃຊ້ສິນຄ້າ ແລະຮັບເອົາຄຳຮ້ອງທຸກຂອງປະຊາຊົນ.

ǀ ປະຊາຊົນຊາວນະຄອນຫລວງວຽງຈັນ ຕ້ອງການແຈ້ງເຫດ ແລະຂໍຄວາມຊ່ວຍເຫລືອ ສາມາດໂທເບີ 1191 ຕະຫລອດ 24 ຊົ່ວໂມງ ຈາກທຸກເຄືອຂ່າຍໂດຍບໍ່ເສຍຄ່າ.

ຕູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON



108 ສາລະ

# ຄວາມສະເໝີພາບຍິງ-ຊາຍ

ໂດຍ: ຕົ້ນແປກ



ຄວາມສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽບກັນທາງສິດ, ຜົນປະໂຫຍດ, ຄວາມຮັບຜິດຊອບ ແລະ ໂອກາດເຂົ້າເຖິງແຫລ່ງຊັບພະຍາກອນທຳມະຊາດ, ການເບິ່ງແຍງດູແລ, ການຮັກສາສຸຂະພາບ, ການສຶກສາ, ການບໍລິການ, ການປະກອບອາຊີບ ແລະ ການໄດ້ຮັບໜ້າທີ່ຕຳແໜ່ງໃນທຸກຂົງເຂດວຽກງານ ໃນສັງຄົມ, ຊຸມຊົນ ແລະ ຄອບຄົວ ທັງໄດ້ຮັບເງື່ອນໄຂເທົ່າທຽມກັນໃນການພັດທະນາຕົນເອງ; ປະຊາຊົນລາວໂດຍລວມ ບໍ່ຈຳແນກເພດ, ອາຍຸ, ເຜົ່າ, ເຊື້ອຊາດ, ຖານະທາງດ້ານເສດຖະກິດ-ສັງຄົມ, ລະດັບການສຶກສາ, ຄວາມເຊື່ອ, ສາສະໜາ ແລະ ພູມລຳເນົາ ລ້ວນແຕ່ມີຄວາມສະເໝີພາບທາງດ້ານການເມືອງ-ການປົກຄອງ, ເສດຖະກິດ, ວັດທະນະທຳ, ການສຶກສາ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ວິທະຍາສາດ ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສາຍຜົວພັນຄອບຄົວ, ຄຳຮ້ອງທຸກ.

ລັດ ສປປລາວ ໄດ້ສົ່ງເສີມວຽກງານຄວາມສະເໝີພາບຍິງ-ຊາຍ ໂດຍການວາງນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນດຳເນີນງານ, ໂຄງການ, ສຶກສາອົບຮົມສ້າງຈິດສຳນຶກ, ປະກອບບຸກຄະລາກອນ, ສະໜອງຂໍ້ມູນຂ່າວສານ, ງົບປະມານ, ວັດຖຸອຸປະກອນ ແລະ ສ້າງທຸກເງື່ອນໄຂ ໃຫ້ຍິງ-ຊາຍ ໄດ້ຮັບການພັດທະນາຕົນເອງຢ່າງຮອບດ້ານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານດັ່ງກ່າວ ພ້ອມທັງຊຸກຍູ້ບຸກລະຄົນບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມສະໜັບສະໜູນດ້ານທຶນຮອນ, ເຕັກນິກວິຊາການ, ວັດຖຸປັດໄຈຕ່າງໆ ເຂົ້າໃນວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ ໂດຍການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ມີການພັດທະນາ, ປະຕິບັດຕາມຖະແຫລງການສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ.

ສະພາແຫ່ງຊາດໄດ້ຊຸກຍູ້ສົ່ງເສີມຄະນະສະມາຊິກເພດຍິງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ເຂົ້າຮ່ວມໃນກິດຈະກຳສົ່ງເສີມຄວາມສະເໝີພາບຍິງ-ຊາຍ; ຊີ້ນຳ-ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວ ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນຍຸດທະສາດ ແລະ ນະໂຍບາຍກ່ຽວກັບການເຊື່ອມສານທັດສະນະບົດບາດຍິງ-ຊາຍ ແລະ ສິດສະເໝີພາບຍິງ-ຊາຍ; ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ວຽກງານປົກປ້ອງພັດທະນາແມ່ ແລະ ເດັກ; ສ້າງ, ເຂົ້າຮ່ວມ, ຕີຄວາມໝາຍ ແລະ ຈັດຕັ້ງປະຕິບັດຖະແຫລງການ, ສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບແມ່ຍິງ ທີ່ ສປປລາວ ເປັນພາຄີ; ຈັດຕັ້ງ, ຊີ້ນຳ ແລະ ຕິດຕາມກວດກາ ການບໍລິການຮັບໃຊ້ປະຊາຊົນ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ;

ຄັດຈາກ: ຮ່າງກົດໝາຍວ່າດ້ວຍຄວາມສະເໝີພາບ-ຍິງຊາຍ

ສາລາກະວີ

# ສາຍສຳພັນລາວ-ຫວຽດ

# ໂດຍ: ລູກຫດາສາມປາງ

❊ ສາຍເອີຍ ສາຍສອດກ້ຽວ
ສາຍສຳພັນສາຍໃຈ
ສາຍພູຫລວງປອງປັ້ນ
ສາມັກຄີຊ່ວຍຊ້ວານ

ກົມກ່ຽວສົດໃສ
ທີ່ຮົງໝາຍໝັ້ນ
ສຳພັນລາວຫວຽດນ້ອງພີ່
ເສີມສ້າງຮ່ວມໃຈ

❊ ສອງຊາດລາວຫວຽດໄດ້
ຍາວນານຍືນສະຖຽນ
ເຖິງແມ່ນພູຜາກັ້ນ
ປອງດອງໃຈຮັດອີ້ງ

ຫອມຮັກແພງກັນ
ໜຶ່ງດຽວໜຽວແໜ້ນ
ເຫວຊັນກໍປີນໄຕ່
ຊູຊ້ວານຊ່ວຍເຫລືອ

❊ ຈຸນເຈືອເດີນຜ່ຳພ້ອມ
ຖະໜອມແພງພຽນຮັກ
ປວງປະຊາສອງກ້ຳ
ສານຕໍ່ຄວາມຜູກຝັ້ນ

ຄຽງບ່າເຝືອແຝງ
ດັ່ງດາວເດືອນຟ້າ
ຈິງໃຈຮັກທໍ່
ບໍ່ຫັນຮ້າງຫ່າງກັນ

❊ ສອງຝັກລາວຫວຽດນັ້ນ
ຫອມຫວນຍືນຍາວນານ
ຫວຽດນາມ-ລາວພຽນຕຸ້ມ
ຝັງໃຈກົມກ່າຍກ້ຽວ

ທຽມດັ່ງມາລາບານ
ກິ່ນມີສູນຫາຍເສົ້າ
ດອມດຽວໂດຍດັ່ງ
ສະເໝີນ້ຳຄູ່ປາ

❊ ສືບທອດມາແຕ່ເຄົ້າ
ຄວາມສຳພັນມີມາ
ມູນເຊື້ອຂັນແຂງກ້າ
ຮ່ວມທາລາແມ່ນ້ຳ
ສອງຂ້າງລາວ-ຫວຽດພີ່ນ້ອງ

ເຖິງຍຸກປັດຈຸບັນ
ຍິ່ງທະວີຫລາຍດ້ານ
ສອງຝັກລາວຫວຽດສະຫງ່າ
ສາຍພູຫລວງເປັນບ່ອນຈັ້ງ
ປະຄອງສູ້ໄລ່ມານ

❊ ຕ້ານພວກຜີຍັກຮ້າຍ
ຕີສັດຕູປົບຕາຍ
ພວກໝູ່ມານຖອຍຈ້າວ
ຍ້ອນຫວຽດ-ລາວກັ່ນກ້າ

ໃຈໜຶ່ງສາມັກຄີ
ມຸ່ນທະລາຍຢຳຢ້ານ
ເຫລືອຕາຍໂອຍອ່ອນ
ຟັນຂ້າໄລ່ຕີ

❊ ເພີ່ມທະວີຮັດແໜ້ນ
ຮ່ວມນະທີສາຍທານ
ນີລັນດອນທະນົງໝັ້ນ
ສາຍໃຈຫອມທໍ່ຫຸ້ມ

ງາມສະຫງ່າລາສີ
ໜ່ວຍພູຜາຊັ້ນ
ສະພານໃຈກັນກ່າຍ
ສອງກ້ຳຢູ່ສະຖຽນ ແທ້ແລ້ວ!



ສຸກສະບາຍຫາຍໂຣຄາ

# ປົມໃນໃຈຂອງຄົນເປັນແມ່

ແປ ແລະ ຮຽບຮຽງໂດຍ: ສາວແອ່ນ



ເຊື່ອວ່າແມ່ຫລາຍໆຄົນ ເຄີຍມີຄວາມຮູ້ສຶກຜິດຕໍ່ລູກບໍ່ຫລາຍກໍໜ້ອຍ ອາດມີແມ່ບາງຄົນທີ່ມີຄວາມຮູ້ສຶກຜິດຕໍ່ລູກຢູ່ເລິກໆພາຍໃນໃຈຕະຫລອດເວລາ ອາດຈະຮູ້ສຶກຜິດທີ່ຕ້ອງປ່ອຍໃຫ້ລູກຢູ່ກັບຄົນອື່ນ, ຮູ້ສຶກຜິດທີ່ບໍ່ມີເວລາຫລິ້ນກັບລູກ, ຮູ້ສຶກຜິດເວລາຮູ້ສຶກເມື່ອຍແລ້ວຫລົງຮ້າຍ ຫລື ຕີລູກ ແລະ ອື່ນໆ; ດັ່ງນັ້ນ, ບົດຄວາມນີ້ ບັນດາແມ່ໆລອງມາຊອກຮູ້ຕົ້ນຕໍຂອງຄວາມຮູ້ສຶກຜິດ ແລະ ປະເຊີນໜ້າກັບຄວາມຮູ້ສຶກນີ້ຢ່າງກ້າຫານ ເພື່ອຈະສາມາດເອົາຊະນະຄວາມຮູ້ສຶກຜິດຢູ່ໃນໃຈ ເພື່ອເປັນແມ່ທີ່ມີຄວາມສຸກນຳກັນ

ຄວາມຮູ້ສຶກຜິດຂອງແມ່ ອາດເກີດຂຶ້ນຈາກຄວາມຄາດຫວັງໃນບົດບາດຂອງການເປັນແມ່ເອງ ເຊິ່ງຄວາມຄາດຫວັງນັ້ນ ອາດຈະມາຈາກບັນທັດຖານທາງສັງຄົມທີ່ກຳນົດມາດຕະຖານຂອງຄວາມເປັນແມ່ໄວ້ ຕົວຢ່າງ: ແມ່ຕ້ອງລ້ຽງລູກດ້ວຍນົມແມ່ຢ່າງໜ້ອຍ 6 ເດືອນ, ຕ້ອງຫລິ້ນກັບລູກຕະຫລອດເວລາ, ຫ້າມເມື່ອຍ, ຫ້າມພັກຜ່ອນ ແລະ ສົມບູນແບບທີ່ສຸດ ຄົນທີ່ວາງມາດຕະຖານເຫລົ່ານີ້ ເພື່ອເອົາຊະນະຕົນເອງຕະຫລອດ ແຕ່ເມື່ອມັນບໍ່ໄດ້ຕາມຄາດ ຈຶ່ງມີຄວາມຮູ້ສຶກຜິດ ຈົນລືມໄປວ່າ ແມ່ເປັນພຽງມະນຸດທຳມະດາ ທີ່ເມື່ອຍ ແລະ ຮ້ອງໄຫ້ໄດ້.

ຄວາມຮູ້ສຶກຜິດຂອງແມ່ ມາຈາກຫລາຍເຫດຜົນ ທັງລັກສະນະນິໄສສ່ວນຕົວຂອງແມ່; ຄວາມກົດດັນຈາກຄອບຄົວ, ໝູ່ເພື່ອນ ຫລື ສື່ສັງຄົມອອນລາຍຕ່າງໆ ຍິ່ງເຫັນລູກຄົນອື່ນມີພັດທະນາການທີ່ດີກວ່າລູກຂອງຕົນ ຍິ່ງເປັນສິ່ງເສີມໃຫ້ຕັ້ງຄຳຖາມກັບຕົນວ່າ ເປັນແມ່ທີ່ຫລົ້ມເຫລວເກີນໄປບໍ່?

ເພື່ອຊອກຫາຄຳຕອບ ທີ່ເຮັດໃຫ້ເກີດຄວາມສົງໄສກ່ຽວກັບຄວາມເປັນແມ່ ລອງພິຈາລະນາຢ່າງເລິກເຊິ່ງເຖິງສາເຫດທີ່ແທ້ຈິງຂອງຄວາມຮູ້ສຶກຜິດ. ຕົວຢ່າງ: ພະຍາຍາມບໍ່ລ້ຽງລູກຄືກັບທີ່ພໍ່ແມ່ລ້ຽງບໍ່? ເນື່ອງຈາກວ່າບາງຄັ້ງ ການພະຍາຍາມຫລາຍເກີນໄປ ສາມາດເຮັດໃຫ້ຮູ້ສຶກຜິດໄດ້ ຫລື ມີອາການຊຶມເສົ້າ, ຂີ້ຫລົງຂີ້ລືມ... ເມື່ອໄດ້ຮັບຄຳຕອບກໍລອງປະເຊີນໜ້າກັບຄວາມຈິງ ມັນອາດຈະຊ່ວຍບັນເທົາຄວາມຮູ້ສຶກຜິດລົງໄດ້.

ຕາມຄວາມເປັນຈິງ ຄຳແນະນຳ ຫລື ມາດຕະຖານໃດໜຶ່ງຂອງສັງຄົມ ເປັນພຽງຄູ່ມືແນະນຳທີ່ແຕ່ລະຄອບຄົວສາມາດປັບປ່ຽນໃຫ້ເຂົ້າກັບວິຖີຊີວິດຂອງຕົນ ສະນັ້ນ, ຕ້ອງຊອກຫາຈຸດທີ່ມີຄວາມສົມດຸນກັນ ຖ້າຮູ້ສຶກຢາກມີເວລາກັບລູກນ້ອຍໃຫ້ຫລາຍ ຕ້ອງຫາເວລາຫວ່າງ ໂດຍໃຫ້ລູກເປັນບູລິມະສິດທຳອິດ ຫລືຖ້າເຈົ້າຕ້ອງປະລູກໃຫ້ຄົນອື່ນລ້ຽງ ອາດຈະໂທຫາລູກເປັນປະຈຳຕາມເວລາ. ເພື່ອໃຫ້ເດັກນ້ອຍຮູ້ວ່າພວກເຮົາບໍ່ໄດ້ລະເລີຍ ເຮັດຫລາຍເທົ່າທີ່ເຈົ້າສາມາດເຮັດໄດ້ ແລະ ຍອມຮັບຄວາມຈິງວ່າມັນເປັນໄປໄດ້ ອາດຈະຊ່ວຍໃຫ້ພວກເຮົາກາຍເປັນແມ່ທີ່ມີຄວາມສຸກຫລາຍຂຶ້ນ.

ໃນຫົວໃຈຂອງຄົນເປັນແມ່ ທຸກຄົນລ້ວນແຕ່ຢາກເປັນແມ່ທີ່ດີທີ່ສຸດ ແຕ່ຢ່າລືມວ່າ ແມ່ທີ່ດີທີ່ສຸດນັ້ນບໍ່ມີຢູ່ຈິງ ແມ່ທຸກຄົນລ້ວນແຕ່ເຄີຍຜິດພາດ ການເປັນແມ່ຈຶ່ງບໍ່ແມ່ນພຽງແຕ່ພະຍາຍາມເປັນແມ່ທີ່ສົມບູນແບບ ແຕ່ຄວນເປັນແມ່ທີ່ຢູ່ໃນຊີວິດລູກ ຮຽນຮູ້ຄວາມຜິດພາດ ແລະ ເຕີບໃຫຍ່ໄປພ້ອມກັບລູກ ຮູ້ຈັກຍອມຮັບຄວາມບໍ່ສົມບູນ, ຫລຸດຄວາມຄາດຫວັງ ແລະ ຢຸດປຽບທຽບໂຕເອງກັບຄົນອື່ນ ແລະ ໃຊ້ເວລາກັບລູກຢ່າງມີຄວາມສຸກ.

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເປັນນິຕິກຳໃຕ້ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;
4. ບຳລຸງ, ສ້າງ ແລະ ຄຸ້ມຄອງນຳໃຊ້ ບຸກຄະລາກອນ ກ່ຽວກັບວຽກງານຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
5. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
6. ອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະທາງບົກ ແລະ ນຳເຂົ້າ ຖັງລົດ, ຊາຊີ, ໜ່ວຍຈັກ ແລະ ອາໄຫຼ່ທີ່ນຳໃຊ້ແລ້ວ;
7. ອະນຸຍາດດັດແປງ ຮູບຮ່າງ ແລະ ເຕັກນິກ;
8. ກຳນົດ ມາດຕະຖານ ເຕັກນິກ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມກ່ຽວກັບວຽກງານຍານ ພາຫະນະທາງບົກ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;
9. ຄຸ້ມຄອງ ແລະ ຢັ້ງຢືນ ຜົນການທົດສອບ ຍານພາຫະນະທາງບົກ, ຊິ້ນສ່ວນ, ວັດສະດຸອຸປະກອນທີ່ຜະລິດ ແລະ ປະກອບ ຢູ່ ສປປລາວ;
10. ກຳນົດມາດຕະຖານເຕັກນິກ, ໃບທະບຽນ, ປ້າຍທະບຽນ, ສູນກວດກາເຕັກນິກ ແລະ ອູ່ສ້ອມ ແປງລົດ ລວມທັງຄຸ້ມຄອງຖານຂໍ້ມູນ, ສະຖິຕິ ກ່ຽວກັບການຂຶ້ນທະບຽນລົດ ໃນຂອບເຂດທົ່ວປະເທດ;
11.ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກັບວຽກງານຍານພາຫະນະທາງບົກ;
12. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;
13. ພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຍານພາຫະນະທາງບົກ;
14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ລັດຖະບານຢ່າງເປັນປົກກະຕິ;
15. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;
2. ສະເໜີ ບຳລຸງ, ສ້າງ ແລະ ຄຸ້ມຄອງນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານຍານພາຫະນະທາງ ບົກ;
3. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ;
4. ອະນຸຍາດດັດແປງ ຮູບຮ່າງ ແລະ ເຕັກນິກ;
5. ຄຸ້ມຄອງ ສູນກວດກາເຕັກນິກ, ອູ່ສ້ອມແປງຍານພາຫະນະທາງບົກ ແລະ ກິດຈະການທີ່ກ່ຽວກັບຍານພາຫະນະທາງບົກ;
6. ປະສານສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ກັບວຽກງານຍານພາຫະນະທາງບົກ;
7. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;
8. ພົວພັນ, ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຍານພາຫະນະທາງບົກ ຕາມການມອບໝາຍ;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 81 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ແລະ ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນ ການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຍານພາຫະນະທາງບົກ;
2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານ ພາຫະນະທາງບົກ ພ້ອມທັງປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮັບຮູ້ ແລະ ເຂົ້າໃຈ;
3. ສະເໜີ ບຳລຸງ, ສ້າງ ບຸກຄະລາກອນກ່ຽວກັບວຽກງານຍານພາຫະນະທາງບົກ;
4. ຄຸ້ມຄອງການຂຶ້ນທະບຽນ ແລະ ກວດກາເຕັກນິກ ຍານພາຫະນະທາງບົກ ປະເພດ ລົດຈັກ, ກົນຈັກກະສິກຳ ຕາມການມອບໝາຍ;
5. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບຍານພາຫະນະທາງບົກ ຕາມການມອບໝາຍ;
6. ຄຸ້ມຄອງ ອູ່ສ້ອມແປງລົດ, ການກວດກາເຕັກນິກ ລົດຈັກ ແລະ ລົດກົນຈັກກະສິກຳ ຕາມການມອບໝາຍ;
7. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງຂັ້ນບ້ານ ກ່ຽວກັບວຽກງານຍານພາຫະນະທາງບົກ;
8. ຮັບ ແລະ ແກ້ໄຂຄຳສະເໜີ ກ່ຽວກັບຍານພາຫະນະທາງບົກ;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງບົກ;
4. ປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງ ແລະ ປະຕິບັດວຽກງານຍານພາຫະນະທາງບົກ;
5. ກວດກາຂໍ້ມູນຍານພາຫະນະທາງບົກທີ່ຈະນຳໄປຜະລິດປ້າຍທະບຽນຍານພາຫານະ;
6. ຄຸ້ມຄອງ, ຜະລິດ ແລະ ຕິດປ້າຍທະບຽນຍານພາຫະນະ;
7. ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 83 ສິດ ແລະ ໜ້າທີ່ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ຂະແໜງການອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບຍານພາຫະນະທາງບົກ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານຍານພາຫະນະທາງ ບົກ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;
3. ພິຈາລະນາການຂໍອະນຸຍາດ ນຳເຂົ້າ, ສົ່ງອອກ, ນຳເຂົ້າ ເພື່ອສົ່ງອອກຕໍ່ ແລ້ວຈຶ່ງແຈ້ງໃຫ້ຂະແໜງ ການ ການເງິນ ຮັບຊາບ;
4. ພິຈາລະນາການສະເໜີ ສ້າງຕັ້ງ, ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດຍານພາຫະ ນະທາງບົກ;
5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມຫົວໜ່ວຍທຸລະກິດການນຳເຂົ້າ ແລະ ສົ່ງອອກ, ຈຳໜ່າຍຍານພາຫະນະທາງບົກ ໃຫ້ເໝາະສົມ ຕາມສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
6. ຮັບ ແລະແກ້ໄຂຄຳສະເໜີ ຂອງຜູ້ດຳເນີນທຸລະກິດຍານພາຫະນະທາງບົກ ແລະ ຜູ້ຊົມໃຊ້;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຍານພາຫະນະທາງບົກ ຕໍ່ຂັ້ນເທິງຊາບ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ອ່ານຕໍ່ສະບັບໜ້າ...




## ຮັກລູກໃຫ້ຖືກທາງ

ໂດຍ: ດົ້ນກົບເມກ

ບັດນີ້ພໍ່ແມ່ບາງຄົນໄດ້ອ່ານ ຄົງຈະຄິດຕ້ານ ຫລື ສວນກະແສກັບ ຂ້າພະເຈົ້າວ່າ: ພໍ່ແມ່ທຸກຄົນຕ້ອງຮັກລູກຢາກໃຫ້ລູກມີຄວາມສຸກ ແລະ ຖືຕົນວ່າຄວາມຮັກຂອງຕົນມີຕໍ່ລູກຍ່ອມຖືກສະເໝີ ເຊິ່ງຄວາມຈິງແລ້ວ ຍັງມີພໍ່ແມ່ຫລາຍຄົນທີ່ຮັກລູກເກີນໄປຈົນຄວາມຮັກກາຍເປັນຄວາມຫລົງ ເຊິ່ງຄວາມຫລົງນີ້ ສ່ວນໃຫຍ່ເກີດມາຈາກການຂາດສະຕິປັນຍາເຖິງວ່າພໍ່ແມ່ບາງຄົນມີປັນຍາຫາເງິນລ້ຽງລູກ ກິນອີກແປດຊາດກໍບໍ່ໝົດ ແຕ່ປັນຍາໃນການອົບຮົມລ້ຽງລູກໃຫ້ກາຍເປັນຄົນດີຂອງສັງຄົມນັ້ນໜ້ອຍ.

ຖ້າພໍ່ແມ່ຄົນໃດທີ່ມີວິທີການຫາຊັບດ້ວຍການໂກງ-ເອົາປຽບຄົນອື່ນ ບັນດາລູກ ຫລື ຄົນອ້ອມໂຕກໍຈະໄດ້ຮັບອິດທິພົນຕາມ ເຖິງແມ່ນວ່າມີເງິນເຕັມຖົງ-ມີລົດໃຫຍ່ຄັນງາມຂີ່ ແຕ່ກໍບໍ່ຮູ້ຈັກເຄົາລົບກົດກະຕິກາລວມ, ເຮັດສິ່ງໃດມັກສະແດງອອກແບບເຫັນແກ່ໂຕ ເຂົ້າທຳນອງທີ່ວ່າຕົນເອງຕ້ອງໄດ້ກ່ອນ..., ພໍ່ແມ່ບາງຄົນຮັກລູກ ແລະ ລ້ຽງລູກແບບບໍ່ໃຫ້ຮູ້ຈັກກັບຄຳວ່າຜິດຫວັງ ຫລື ບັນຫາຂອງຊີວິດເວລາອອກເຮືອນກໍຈະໃຫ້ຄົນຮັບໃຊ້ຄອຍປະຄອງຮັບໃຊ້ ຕະຫລອດເຖິງການເຂົ້າຫ້ອງນ້ຳກໍໃຫ້ຄົນຮັບໃຊ້ຢືນເຝົ້າ, ພຶດຕິກຳການລ້ຽງລູກຂອງພໍ່ແມ່ແຕ່ລະຄົນນັ້ນແຕກຕ່າງກັນ.

ຄຸນນະທຳທີ່ພໍ່ແມ່ຄວນສຳນຶກໃນສະໝອງ ແລະ ຫົວໃຈໄວ້ສະເໝີນັ້ນວ່າ: ລູກມັກຈະປະພຶດເອົາແບບຢ່າງຈາກພໍ່ແມ່. ດັ່ງນັ້ນ, ພໍ່ແມ່ຕ້ອງເປັນແບບຢ່າງທີ່ດີໃຫ້ແກ່ລູກເຊັ່ນ: ເວົ້າແນວໃດເຮັດແນວນັ້ນ, ການຖືສັດຈະເປັນສິ່ງສຳຄັນ ເຊິ່ງຖ້າວ່າພໍ່ແມ່ບໍ່ຖືເອົາບົດບາດສຳຄັນໃນການອົບຮົມ-ສຶກສາແກ່ລູກໃນເຮືອນຍ່ອມຍາກແກ່ຄູອາຈານທີ່ຈະສອນໃຫ້ເປັນຄົນດີສົມບູນໄດ້; ເພາະເວລານັກຮຽນກັບມາເຮືອນກໍຈະພົບກັບວິທີລ້ຽງລູກອີກແບບໜຶ່ງແຕ່ຢູ່ໂຮງຮຽນໃຊ້ຄຸນນະທຳເຫັນແກ່ສ່ວນລວມເປັນໃຫຍ່.

ທ່ານຜູ້ອ່ານລອງຄິດເບິ່ງວ່າ ມີຫລາຍພຶດຕິກຳເດັກນ້ອຍໄດ້ຈາກພໍ່ແມ່ ຫລື ຄູອາຈານຢູ່ໂຮງຮຽນ; ເວລາຢູ່ກັບພໍ່ແມ່ຂ້ອນຂ້າງຫລາຍກວ່າຢູ່ໂຮງຮຽນ; ທຳມະຊາດມະນຸດເດັກນ້ອຍມັກຕາມໃຈ....!

## ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287




**ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ (ສະບັບປັບປຸງ)**

**ຄັດໂດຍ: ກົງທະນູຄຳ ພິພັດເສລີ**

3. ຮອບດ້ານ ໝາຍເຖິງ ການດຳເນີນຄະດີ ຕ້ອງຊອກຫາຫລັກຖານ ທັງຜູກມັດ ແລະ ແກ້ມັດ;

4. ຄົບຖ້ວນ ໝາຍເຖິງ ການດຳເນີນຄະດີ ນອກຈາກມີ ສີ່ ອົງປະກອບຂອງການກະທຳຜິດແລ້ວ ຕ້ອງຊອກຫາສາເຫດທີ່ພາໃຫ້ມີການຫລຸດຜ່ອນ ຫລື ເພີ່ມຄວາມຮັບຜິດຊອບທາງອາຍາຕື່ມອີກ;




# ລົງນາມກົດໝາຍຫ້າມການຊຳລະເງິນດິຈິຕອນໃນລັດເຊຍ

**ແປ ແລະ ຮຽບຮຽງ: ນາງ ປາກາລັກ ພິມມີໄຊ**



ອີງຕາມການລາຍງານຂ່າວຈາກເວັບໄຊ Coindesk.com ເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ທ່ານ ວາລາດີເມຍ ປູຕິນ ປະທານາທິບໍດີລັດເຊຍ ໄດ້ລົງນາມໃນກົດໝາຍຫ້າມການຊຳລະເງິນດິຈິຕອນທົ່ວປະເທດ ທີ່ອີງຕາມການດັດແກ້ນະໂຍບາຍໃນວັນທີ 13 ກໍລະກົດ 2022 ໂດຍກົດໝາຍສະບັບດັ່ງກ່າວ ໄດ້ຮັບການຮັບຮອງໂດຍສະມັດຊາລັດເຊຍ ຫລື ສະພາດູມາ ເມື່ອວັນທີ 8 ກໍລະກົດ 2022 ເຊິ່ງຫ້າມໃຊ້ສິນຊັບດິຈິຕອນ ແລະ ຢູທິລິຕີ ໂທເຄນ (Utility token) ໃນການຈ່າຍຊຳລະຄ່າບໍລິການ ແລະ ຜະລິດຕະພັນຕ່າງໆໃນລັດເຊຍ.

ການດັດແກ້ກົດໝາຍຄັ້ງນີ້ ແມ່ນການເພີ່ມກົດໝາຍສິນຊັບດິຈິຕອນໃນສະບັບທີ່ຜ່ານມາ ທີ່ໄດ້ຮ່າງຂຶ້ນໃນປີ 2020 ໂດຍຫ້າມການໃຊ້ສະກຸນເງິນດິຈິຕອນໃນການຈ່າຍຊຳລະສິນຄ້າ ແລະ ການບໍລິການ.

ກະຊວງການເງິນຂອງລັດເຊຍ ໄດ້ນຳສະເໜີຮ່າງກົດໝາຍຕໍ່ລັດຖະສະພາລັດເຊຍ ເພື່ອຄວບຄຸມຫລຽນດິຈິຕອນໃນປະເທດເມື່ອເດືອນກຸມພາ 2022 ເຊິ່ງກົງກັນຂ້າມກັບທັດສະນະຂອງທະນາຄານກາງລັດເຊຍທີ່ໄດ້ຊຸກຍູ້ການຫ້າມການໃຊ້ສະກຸນເງິນດິຈິຕອນໃນປະເທດ.

**ແຫລ່ງຂໍ້ມູນ: Coindesk.com**










# ລັດຖະສະພາອິນເດຍ ລົງຄະແນນສຽງເລືອກຕັ້ງປະທານາທິບໍດີຄົນໃໝ່

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

ສຳນັກຂ່າວ AFP ລາຍງານວ່າ: ລັດຖະສະພາອິນເດຍໄດ້ລົງຄະແນນສຽງເລືອກຕັ້ງປະທານາທິບໍດີຄົນໃໝ່ໃນວັນຈັນທີ 18 ກໍລະກົດ 2022 ໂດຍທ່ານ ນາງ ຮູປາດີ ເມີມູ ຈາກຊົນເຜົ່າສັນທານ ໄດ້ຮັບການແຕ່ງຕັ້ງໂດຍພັກບາຣະຕິຍະ (BJP) ຂອງທ່ານ ນະເຣນທຣາ ໂມດີ ນາຍົກລັດຖະມົນຕີອິນເດຍ ແລະ ຍັງໄດ້ຮັບການສະໜັບສະໜູນຈາກພັກຝ່າຍຄ້ານ ແລະ ລັດຖະສະພາ ໄດ້ລົງສະໝັກຊິງຕຳແໜ່ງປະທານາທິບໍດີ ກັບທ່ານ ຍົກວັນ ສິນຫະ ອະດີດສະມາຊິກ BJP ແລະ ອະດີດລັດຖະມົນຕີວ່າການກະຊວງການເງິນ ແລະ ກິດຈະການພາຍນອກ.

ຖ້າທ່ານ ນາງ ຮູປາດີ ເມີມູ ໄດ້ຮັບການເລືອກຕັ້ງ, ທ່ານຈະເປັນປະທານາທິບໍດີຊົນເຜົ່າຄົນທຳອິດຂອງອິນເດຍ ແລະ ເປັນປະທານາທິບໍດີແມ່ຍິງຄົນທີສອງຂອງອິນເດຍ.

ທ່ານ ນາງ ຮູປາດີ ເມີມູ ອາຍຸ 64 ປີ ໄດ້ເລີ່ມການເຮັດວຽກເປັນຄູສອນໃນລັດໂອຣິສສາ ໃນພາກຕາເວັນອອກຂອງອິນເດຍ ກ່ອນທີ່ຈະເຂົ້າສູ່ການເມືອງ, ທ່ານເຄີຍຮັບໃຊ້ເປັນລັດຖະມົນຕີໃນລັດໂອຣິສສາ ແລະ ເຄີຍເປັນຜູ້ວ່າການລັດຢາຣຄັດ.

ປະທານາທິບໍດີອິນເດຍ ຈະຖືກເລືອກຈາກສະມາຊິກເກືອບ 5.000 ຄົນ ຈາກລັດຖະສະພາ ແລະ ສະພານິຕິບັນຍັດພາກພື້ນໃນທົ່ວປະເທດ.

ການລົງຄະແນນສຽງແຕ່ລະຄັ້ງ ແມ່ນໃຫ້ປະລິມານຕາມຂະໜາດຂອງເຂດເລືອກຕັ້ງ ແລະ ຈັດອັນດັບຜູ້ສະໝັກຕາມລຳດັບຄວາມນິຍົມ; ຖ້າຜູ້ສະໝັກບໍ່ໄດ້ຮັບຄະແນນຫລາຍກ່ວາ 50% ຂອງຄະແນນສຽງທັງໝົດ, ຜູ້ສະໝັກທີ່ມີຄະແນນຕ່ຳສຸດຈະຖືກຕັດອອກ ແລະ ຈະມີການລົງຄະແນນສຽງໃໝ່ຈົນກວ່າຈະມີຜູ້ໄດ້ຮັບສູງສຸດເກີນ 50% ເຊິ່ງຄາດວ່າຈະໄດ້ຮັບການປະກາດໃນທ້າຍອາທິດນີ້.

ຕຳແໜ່ງນາຍົກລັດຖະມົນຕີໃນອິນເດຍແມ່ນຕຳແໜ່ງສູງສຸດໃນອຳນາດບໍລິຫານ ແຕ່ປະທານາທິບໍດີສາມາດໂຈະ ຫລືສັ່ງໃຫ້ທົບທວນຄືນການບໍລິຫານໄດ້ ລວມທັງມີບົດບາດສຳຄັນໃນຂະບວນການສ້າງຕັ້ງລັດຖະບານ.

**ແຫລ່ງຂໍ້ມູນ: AFP**










**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພິມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ